# ຜູ້ແທນປະຊາຊົນ
PHOUTHEN PASAXON
ສຽງຂອງສະພາແຫ່ງຊາດ
ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na
25-31 ຕຸລາ 2025
ປີທີ 14
ສະບັບທີ 1039
ລາຍສັບປະດາ


## ຜົນສຳເລັດກອງປະຊຸມຄົບຄະນະ ຄັ້ງທີ 11 ຂອງ ຄະນະບໍລິຫານງານສູນກາງພັກ ສະໄໝທີ XI



(ສພຊ) - ກອງປະຊຸມຄົບຄະນະ ຄັ້ງທີ 11 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ທີ່ດຳເນີນມາແຕ່ວັນທີ 21-24 ຕຸລາ 2025 ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ທີ່ສຳນັກງານສູນກາງພັກ, ພາຍໃຕ້ການເປັນປະທານຂອງສະຫາຍທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໂດຍການເຂົ້າຮ່ວມຂອງບັນດາສະຫາຍຄະນະບໍລິຫານງານສູນກາງພັກ, ເລຂາພັກແຂວງ, ກະຊວງ, ອົງການຈຳນວນໜຶ່ງ.

ກອງປະຊຸມຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດທີ່ຟົດຟື້ນປະຕິວັດ ແລະ ດ້ວຍຄວາມຮັບຜິດຊອບສູງ, ກ້າເບິ່ງບັນຫາ

ອ່ານຕໍ່ໜ້າ 4



### ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ທັງຕ້ອງປະຕິບັດປະຊາທິປະໄຕຢ່າງກວ້າງຂວາງຕໍ່ປະຊາຊົນ, ທັງຕ້ອງຜະເດັດການຕໍ່ສັດຕູຂອງປະຊາຊົນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 485)

ລັດຕ້ອງຈັດຕັ້ງການຄຸ້ມຄອງສັງຄົມເປັນຢ່າງດີ, ການຄຸ້ມຄອງສັງຄົມໄດ້ດີເທົ່າໃດ ກໍຍິ່ງເຮັດໃຫ້ບົດບາດການນຳພາຂອງພັກ, ການສະແດງອອກຂອງລັກສະນະຊົນຊັ້ນ ແລະ ລັກສະນະປະຊາຊົນຂອງລັດ ຍິ່ງໄດ້ຮັບການປັບປຸງ ແລະ ເຊີດຊູໃຫ້ສູງຂຶ້ນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 485)

ອ່ານຕໍ່ສະບັບໜ້າ

## ພິທີມອບໃບຢັ້ງຢືນໜ່ວຍພັກ ປອດໃສ ເຂັ້ມແຂງ ໜັກແໜ້ນ, ມອບບັດສະມາຊິກພັກ ແລະ ປະກາດພະນັກງານຮັບບຳນານ



(ສພຊ)-ຕອນບ່າຍວັນທີ 20 ຕຸລາຜ່ານມາ, ຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ຈັດພິທີມອບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ 2024, ມອບບັດສະມາຊິກພັກໃຫ້ສະມາຊິກພັກສົມບູນແລະປະກາດພະນັກງານຮັບນະໂຍບາຍອຸດໜູນບຳນານໂດຍການເປັນປະທານຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານຄະນະປະຈຳສະພາແຫ່ງ

ອ່ານຕໍ່ໜ້າ 4

## ກຳມາທິການຍຸຕິທຳ ປະຊຸມຄົບຄະນະ




(ສພຊ) - ກອງປະຊຸມຄົບຄະນະກຳມາທິການຍຸຕິທຳ (ກມຍທ) ປະຈຳປີ 2025 ໄດ້ຈັດຂຶ້ນໃນວັນອາທິດທີ 26 ຕຸລາຜ່ານມາ ທີ່ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ; ມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ (ສພຊ), ບັນດາທ່ານປະ

ອ່ານຕໍ່ໜ້າ 9

## ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ກມຍທ



(ສພຊ) - ກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນຂອງກຳມາທິການຍຸຕິທຳ (ກມຍທ) ໄດ້ຈັດຂຶ້ນເມື່ອວັນທີ 25 ຕຸລາຜ່ານມາ ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ, ມີບັນດາທ່ານຮອງປະທານກຳມາທິການ ແລະ ພະນັກງານທີ່ຢູ່ ກມຍທ ເຂົ້າຮ່ວມ.

ຈຸດປະສົງເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບກົນໄກການປະສານງານໃນການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງກຳມາທິການຍຸຕິທຳກັບພາກສ່ວນທີ່ກ່ຽວຂ້ອງ ຮັບປະກັນເຮັດໃຫ້ການຈັດ

ອ່ານຕໍ່ໜ້າ 12

## ຫາລືແຜນການສ້າງ ແລະ ປັບປຸງກົດໝາຍ



(ສພຊ) - ວັນທີ 23 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມປຶກສາຫາກ່ຽວກັບຮ່າງກົດໝາຍທີ່ກຳນົດໃນແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ຂອງສະພາແຫ່ງຊາດ ຊຸດທີ X ໂດຍການເປັນປະທານຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ, ມີບັນດາທ່ານຮອງປະທານກຳມາທິການ ສພຊ, ຮອງລັດຖະມົນຕີ 10 ກະຊວງ ແລະ 1 ອົງການ, ແລະ ຮອງຜູ້ວ່າການທະນາຄານແຫ່ງ ສປປລາວ ເຂົ້າຮ່ວມ.

ຈຸດປະສົງເພື່ອຮັບປະກັນໃຫ້ແກ່ການເປັນເສນາທິການໃນວຽກງານສ້າງ ແລະ ປັບປຸງກົດໝາຍຂອງກຳມາທິການກົດໝາຍ, ກຳມາທິການທີ່ກ່ຽວຂ້ອງ ແລະ ພາກສ່ວນທີ່ຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ ແນໃສ່ເຮັດໃຫ້ແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ ຂອງສະພາແຫ່ງຊາດ ຊຸດທີ X ແຕ່ປີ

ອ່ານຕໍ່ໜ້າ 9

## ກອງປະຊຸມລັດຖະສະພາທີ່ເປີດກວ້າງ ແລະ ການມີສ່ວນຮ່ວມຂອງປະຊາຊົນ




(ສພຊ) - ກອງປະຊຸມສຳມະນາກ່ຽວກັບລັດຖະສະພາທີ່ເປີດກວ້າງ ແລະ ການມີສ່ວນຮ່ວມຂອງປະຊາຊົນ ເພື່ອການບໍລິຫານ-ຄຸ້ມຄອງທີ່ກວມລວມ ແລະ ຕອບສະໜອງ ໄດ້ຈັດຂຶ້ນໃນວັນທີ 22-23 ຕຸລານີ້ ທີ່ໂຮງ

ອ່ານຕໍ່ໜ້າ 3



ອາການເສບຕິດກາເຟ... (ໜ້າ 9)




ຈົນ ອອກກົດໝາຍ... (ໜ້າ 11)

ວິເສດ ສະແຫວງສຶກສາ

ນະໂຍບາຍທີ່ມີປະສິດທິພາບ... (ໜ້າ 12)

# ຄະນະຜູ້ແທນລັດຖະບານອັງກິດ ຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ




(ສພຊ) - ຕອນບ່າຍວັນທີ 22 ຕຸລາຜ່ານມາ ໄດ້ມີການພົບປະສອງຝ່າຍລະຫວ່າງທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ພ້ອມດ້ວຍຄະນະ ກັບທ່ານ ແມັດ ເວສເທິນ ທູດການຄ້າ ແຫ່ງ ລາຊະອານາຈັກອັງກິດ ພ້ອມດ້ວຍຄະນະ. ໃນການພົບປະຄັ້ງນີ້, ສອງຝ່າຍໄດ້ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ພ້ອມທັງຮ່ວມກັນຕີລາຄາການພົວພັນຮ່ວມມືລະຫວ່າງສອງປະເທດເວົ້າລວມ, ເວົ້າສະເພາະສອງອົງການນິຕິບັນຍັດ ລວມທັງປຶກສາຫາລືບັນດາຫົວຂໍ້ໃນຂົງເຂດຄວາມຮັບຜິດຊອບຂອງ ກຜງສ ທີ່ຕິດພັນກັບການສ້າງເສດຖະກິດຂອງ ສປປລາວ ໃນຕໍ່ໜ້າ; ທົບທວນຄືນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ແລະ ກົດໝາຍວ່າດ້ວຍການວັດແທກ, ແລກປ່ຽນປະສົບການຂອງປະເທດອັງກິດ ກ່ຽວກັບການນຳໃຊ້ການກວດກາຂອງລັດຖະສະພາເພື່ອປັບປຸງດ້ານການຄຸ້ມຄອງ. ນອກຈາກນີ້, ຍັງໄດ້ແລກປ່ຽນບັນຫາສຳຄັນທີ່ເປັນບຸລິມະສິດດ້ານນິຕິກຳ, ການຕິດຕາມກວດກາໃນຂົງເຂດເສດຖະກິດ, ບາງທັດສະນະຂອງກຳມາທິການໃນການສະໜັບສະໜູນການຮ່ວມມືສາກົນ ແລະ ສືບຕໍ່ປຶກສາຫາລືກ່ຽວກັບໂອກາດໃນການມີສ່ວນຮ່ວມລະຫວ່າງ ສປປລາວ ແລະ ສະຖາບັນລັດຖະສະພາລາຊະອານາຈັກອັງກິດ ໃຫ້ມີຄວາມແໜ້ນແຟ້ນ ແລະ ເລິກເຊິ່ງຂຶ້ນກວ່າເກົ່າ.

ທ່ານ ແມັດ ເວສເທິນ ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ທ່ານຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ພ້ອມດ້ວຍຄະນະ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ເຕັມໄປດ້ວຍໄມຕີຈິດມິດຕະພາບທີ່ດີ ຕໍ່ການມາຢ້ຽມຢາມ ສປປລາວ ຢ່າງເປັນທາງການຄັ້ງນີ້. ພ້ອມກັນນັ້ນ, ທັງສອງຝ່າຍເຫັນດີສືບຕໍ່ປະສານງານ ແລະ ປຶກສາຫາລືກ່ຽວກັບການຮ່ວມມືໃນຕໍ່ໜ້າ ເພື່ອຕິດຕາມການຈັດຕັ້ງປະຕິບັດນິຕິກຳ, ການແລກປ່ຽນບົດຮຽນ ແລະ ສົ່ງເສີມວິຊາການໃນດ້ານນິຕິກຳ ແລະ ການຄຸ້ມຄອງວຽກງານຂົງເຂດເສດຖະກິດ-ການເງິນ, ການຕິດຕາມກວດກາ ແລະ ການຮ່ວມມືສອງຝ່າຍໃນຕໍ່ໜ້າ.

ນອກຈາກພົບປະກັບກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຄະນະຜູ້ແທນອັງກິດ ຍັງໄດ້ສືບຕໍ່ຢ້ຽມຢາມ ແລະ ພົບປະເຮັດວຽກກັບຂະແໜງການທີ່ກ່ຽວຂ້ອງຂອງລັດຖະບານ ແລະ ອົງການປົກຄອງນະຄອນຫຼວງວຽງຈັນ ອີກດ້ວຍ.

# ກິດຈະກຳແຂ່ງຂັນບານເຕະມິດຕະພາບ



(ສພຊ)-ກິດຈະກຳແຂ່ງຂັນກິລາບານເຕະມິດຕະພາບ ລະຫວ່າງສອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວຂອງສະພາແຫ່ງຊາດ ແລະ ອົງການໄອຍະການປະຊາຊົນສູງສຸດ ໄດ້ຈັດຂຶ້ນເມື່ອວັນທີ 23 ຕຸລາຜ່ານມາ ທີ່ເດີ່ນລ້ານຊ້າງອິນທາ, ນະຄອນຫຼວງວຽງຈັນ ນຳໂດຍສະຫາຍ ສົມບູນ ໂຄດໄຊ ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ອຸດົມລິດ ຈັນທະຈັກ ເລຂາຄະນະບໍລິຫານງານຊາວໜຸ່ມອົງການໄອຍະການປະຊາຊົນສູງສຸດ, ມີຄະນະບໍລິຫານງານຊາວໜຸ່ມ, ພະນັກງານ ແລະ ນັກກິລາຂອງ 2ພາກສ່ວນເຂົ້າຮ່ວມຢ່າງຫຼວງຫຼາຍ; ທັງນີ້, ກໍເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນການສະເຫຼີມສະຫຼອງ 3 ວັນປະຫວັດສາດຂອງຊາດ, ຂອງພັກ ໃຫ້ເປັນຂະບວນການຟົດຟື້ນ ແລະ ກວ້າງຂວາງ ທັງເສີມຂະຫຍາຍ ແລະ ຮັດແໜ້ນນ້ຳໃຈຄວາມສາມັກຄີຮັກແພງລະຫວ່າງສອງຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ.

# ຜູ້ແທນສະພາແຫ່ງຊາດ ສຳເລັດການເຂົ້າຮ່ວມກອງປະຊຸມໃຫຍ່ IPU ຄັ້ງທີ 151



(ສພຊ) - ວັນທີ 19-23 ຕຸລາຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ສະຫະພັນລັດຖະສະພາສາກົນ (IPU) ຄັ້ງທີ 151 ທີ່ ເຈນີວາ, ປະເທດສະວິດເຊີແລນ ໂດຍມີຄະນະຜູ້ແທນຫຼາຍກວ່າ 1,627 ຄົນ ຈາກ 141 ປະເທດທີ່ເປັນສະມາຊິກ IPU, ອົງການສະຫະປະຊາຊາດ, ຕົວແທນອົງການລັດຖະສະພາປະຈຳພາກພື້ນຈາກທົ່ວໂລກ ແລະ ອົງການຈັດຕັ້ງສາກົນຕ່າງໆ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ດຳເນີນພາຍໃຕ້ຫົວຂໍ້: “ຍຶດຖືບັນດາຫຼັກການດ້ານມະນຸດສະທຳ ແລະ ສະໜັບສະໜູນການປະຕິບັດງານດ້ານມະນຸດສະທຳໃນເວລາທີ່ເກີດວິກິດການ” (UpholdingHumanitarian Norms And Supporting Humanitarian Action In Times Of Crisis)”. ນອກຈາກນັ້ນ, ຍັງມີກອງປະຊຸມກຸ່ມ ASEAN+3, ກອງປະຊຸມກຸ່ມອາຊີ-ປາຊີຟິກ, ກອງປະຊຸມຄະນະບໍລິຫານງານ IPU, ກອງປະຊຸມພົບປະຄະນະສະມາຊິກສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງແລະກອງປະຊຸມລະດັບກຳມາທິການຕ່າງໆຂອງ IPU ທີ່ຈັດຂຶ້ນຄວບຄູ່ກັນໄປ ເຊັ່ນ: ເວທີປາໄສສະມາຊິກລັດຖະສະພາເພດຍິງ IPU; ກອງປະຊຸມກຳມາທິການວ່າດ້ວຍສັນຕິພາບ ແລະ ຄວາມໝັ້ນຄົງສາກົນ, ກຳມາທິການວ່າດ້ວຍການພັດທະນາແບບຍືນຍົງ, ກຳມາທິການວ່າດ້ວຍປະຊາທິປະໄຕແລະສິດທິມະນຸດ, ກຳມາທິການປະຈຳວ່າດ້ວຍວຽກງານອົງການສະຫະປະຊາຊາດ; ເວທີປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມ ແລະ ອື່ນໆ.

ໃນກອງປະຊຸມໃຫຍ່ຄົບຄະນະ, ບັນດາຫົວໜ້າຜູ້ແທນຈາກປະເທດຕ່າງໆ ໄດ້ຂຶ້ນກ່າວປາໄສພາຍໃຕ້ຫົວຂໍ້ຂອງກອງປະຊຸມ ເຊິ່ງຍົກໃຫ້ເຫັນເຖິງສິ່ງທ້າທາຍຕ່າງໆທີ່ກຳລັງເກີດຂຶ້ນໃນໂລກ ແລະ ບົດບາດສຳຄັນຂອງການຈັດຕັ້ງປະຕິບັດບັນດາຫຼັກການດ້ານມະນຸດສະທຳ, ຄວາມໝັ້ນຄົງ, ປະຊາທິປະໄຕ, ຄວາມສະເໝີພາບ ແລະ ການພັດທະນາແບບຍືນຍົງ. ກອງປະຊຸມຄັ້ງນີ້ ຍັງໄດ້ຮັບຮອງເອົາປະເທດບຣູໄນດາຣູຊາລາມເຂົ້າເປັນສະມາຊິກໃໝ່ຂອງ IPU; ພ້ອມດຽວກັນນັ້ນ, ຍັງໄດ້ພິຈາລະນາຮັບຮອງເອົາບັນຫາຮີບດ່ວນທີ່ເປັນຄວາມກັງວົນຂອງປະຊາຄົມໂລກ ຄື: ການດຳເນີນການຂອງລັດຖະສະພາໃນການຕ້ານອາຊະຍາກຳຂ້າມຊາດ, ອາຊະຍາກຳທາງອິນເຕີເນັດ ແລະ ການຂົ່ມຂູ່ແບບທາງກົງ ແລະ ທາງອ້ອມຕໍ່ປະຊາທິປະໄຕ ແລະ ຄວາມໝັ້ນຄົງຂອງມະນຸດ.

ທ່ານ ຈັນທະວົງ ແສນອາມາດມົນຕີ ຫົວໜ້າຄະນະຜູ້ແທນລາວ ໄດ້ກ່າວປາໄສໃນກອງປະຊຸມໃຫຍ່ຄົບຄະນະໂດຍຍົກໃຫ້ເຫັນເຖິງຄວາມຈຳເປັນອັນຮີບດ່ວນໃນການເສີມຂະຫຍາຍກົດໝາຍມະນຸດສະທຳສາກົນແລະຮັບປະກັນຫຼັກການຂອງການປະຕິບັດດ້ານມະນຸດສະທຳ, ໄດ້ຢືນຢັນທັດສະນະຂອງ ສປປລາວ ຕໍ່ສົນທິສັນຍາເຈນີວາ ແລະ ອະນຸສັນຍາເພີ່ມຕື່ມຂອງສົນທິສັນຍາດັ່ງກ່າວ, ໂດຍຮັບຮູ້ວ່າ ກົດໝາຍມະນຸດສະທຳສາກົນ ຈະບໍ່ເປັນພຽງຂອບວຽກທາງດ້ານກົດໝາຍເທົ່ານັ້ນ ແຕ່ຈະເປັນຂໍ້ຕົກລົງທີ່ມີສິນລະທຳຜູກພັນທຸກໆປະເທດ ພ້ອມທັ້ງສະແດງຄວາມຊົມເຊີຍບັນດາຜູ້ມີສ່ວນຮ່ວມດ້ານມະນຸດສະທຳ ແລະ ບັນດາພະນັກງານບັນເທົາທຸກ ຜູ້ທີ່ຍາມໃດກໍປະສົບກັບຄວາມສ່ຽງໃນການປະຕິບັດໜ້າທີ່ຂອງຕົນໃນການຊ່ວຍເຫຼືອເພື່ອກອບກູ້ເອົາຊີວິດ; ໃນຂະນະດຽວກັນ, ຍັງໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຮ່ວມມືຫຼາຍຝ່າຍ ແລະ ບົດບາດຂອງບັນດາລັດຖະສະພາ ໃນການຜັນຂະຫຍາຍບັນດາມາດຕະຖານດ້ານມະນຸດສະທຳ ເຂົ້າສູ່ລະບົບນິຕິກຳແຫ່ງຊາດ, ການຕິດຕາມ ແລະການຈັດສັນຊັບພະຍາກອນເພື່ອປົກປ້ອງຜູ້ທີ່ມີຄວາມສ່ຽງທີ່ສຸດ. ໃນນາມປະເທດທີ່ຢຶດໝັ້ນຕໍ່ຫຼັກການຢູ່ຮ່ວມກັນໂດຍສັນຕິ, ບໍ່ແຊກແຊງກິດຈະການພາຍໃນ ແລະ ການຮ່ວມມືສາກົນ, ສປປລາວ ເຊື່ອໝັ້ນຢ່າງຍິ່ງວ່າ ດ້ວຍການປະຕິບັດຕາມບັນດາຫຼັກການມະນຸດສະທຳ, ບັນດາລັດຖະສະພາ ສາມາດຊ່ວຍຫຼຸດຜ່ອນ (ບັນເທົາ) ຄວາມທຸກທໍລະມານ; ໃນເວລາດຽວກັນກໍສາມາດສົ່ງເສີມສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຍືນຍົງ ສຳລັບຄົນຮຸ່ນຕໍ່ໄປໃນອະນາຄົດ. ຕອນທ້າຍ, ທ່ານໄດ້ຮຽກຮ້ອງໃຫ້ສະມາຊິກ IPU ເພີ່ມທະວີການຮ່ວມມືທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ດ້ວຍການຊຸກຍູ້ການມີສ່ວນຮ່ວມຂອງປະຊາຊົນເຂົ້າໃນທຸກຂົງເຂດວຽກງານ, ຍົກສູງຜົນປະໂຫຍດຮ່ວມກັນຂອງສັງຄົມ ບົນຈິດໃຈແຫ່ງຄວາມສາມັກຄີກົມກຽວເປັນເອກະພາບ ແລະ ການຮ່ວມມືສາກົນຍັງຄົງເປັນສິ່ງສຳຄັນ, ພ້ອມທັງເພີ່ມທະວີເຮັດບົດບາດຂອງຕົນໃນການຮັບຮອງເອົາບັນດາກົດໝາຍທີ່ສອດຄ່ອງກັບບັນດາຫຼັກການຂອງສາກົນ ແລະອີງໃສ່ສະພາບເງື່ອນໄຂຕົວຈິງພາຍໃນປະເທດ ແລະ ສົ່ງເສີມການທູດລັດຖະສະພາ ໃນການເຮັດໜ້າທີ່ເປັນຂົວຕໍ່ໃຫ້ແກ່ການປຶກສາຫາລືໃນໄລຍະວິກິດການຕ່າງໆ, ສົ່ງເສີມຄວາມໄວ້ເນື້ອເຊື່ອໃຈ ແລະການຮ່ວມມື, ຍົກສູງບັນດາຫຼັກການດ້ານມະນຸດສະທຳ ເປັນເນື້ອໃນຈິດໃຈພື້ນຖານໃນຂອບວຽກດ້ານນິຕິກຳ ທີ່ປົກປ້ອງກຽດສັກສີຂອງມະນຸດ.

ນອກນັ້ນ, ຄະນະຜູ້ແທນລາວ ຍັງໄດ້ເຂົ້າຮ່ວມ ແລະ ປະກອບຄຳເຫັນໃນກອງປະຊຸມກຸ່ມ ASEAN+3, ກອງປະຊຸມກຸ່ມອາຊີ-ປາຊີຟິກແລະກອງປະຊຸມພົບປະຄະນະສະມາຊິກສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງອີກດ້ວຍ.

ກອງປະຊຸມຄັ້ງນີ້, ໄດ້ດຳເນີນໄປໃນບັນຍາກາດທີ່ສະພາບການຂອງໂລກມີຄວາມເຄັ່ງຮ້ອນ ແລະ ຮັບຮອງເອົາຫຼາຍມະຕິທີ່ກ່ຽວພັນກັບບັນຫາການເມືອງໂລກ, ກອງປະຊຸມໃຫຍ່ IPU ໄດ້ຮັບຮອງເອົາວັນເວລາ ແລະ ສະຖານທີ່ຈັດກອງປະຊຸມຄັ້ງທີ 152 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 15-19 ເມສາ 2026 ທີ່ ອິສຕັນບູລ, ປະເທດຕວັກກີ.

# ແລກປ່ຽນບົດຮຽນວຽກງານສື່ມວນຊົນ ແລະ ຫ້ອງມູນເຊື້ອ



(ສພຊ) - ຕອນສວາຍ ວັນສຸກທີ 24 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີການພົບປະແລກປ່ຽນບົດຮຽນວຽກງານສື່ມວນຊົນ ລະຫວ່າງກົມສື່ມວນຊົນ, ຄະນະເລຂາທິການສະພາແຫ່ງຊາດ ກັບ ກົມໂຄສະນາ, ສູນກາງແນວລາວສ້າງຊາດ ໂດຍການເຂົ້າຮ່ວມຂອງທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າກົມສື່ມວນຊົນ ແລະ ທ່ານ ອຸດອນ ບຸດໃບບຸນ ຮອງຫົວໜ້າກົມໂຄສະນາພ້ອມດ້ວຍບັນດາທ່ານຮອງຫົວໜ້າກົມ, ຄະນະພະແນກແລະພະນັກງານຈຳນວນໜຶ່ງຂອງສອງກົມ.

ສອງຝ່າຍໄດ້ລາຍງານໂດຍຫຍໍ້ໃຫ້ກັນແລະກັນຊາບກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່; ໂຄງປະກອບກົງຈັກການຈັດຕັ້ງ ແລະບຸກຄະລາກອນ; ການປະຕິບັດໜ້າທີ່ວຽກງານຂອງສອງກົມໃນໄລຍະຜ່ານມາແລະທິດທາງແຜນການໃນຕໍ່ໜ້າ. ຈາກນັ້ນ, ໄດ້ມີການຖາມ-ຕອບ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ໂດຍສະເພາະວຽກງານສື່ສິ່ງພິມ, ສື່ເອເລັກໂຕຣນິກ, ສື່ອອນລາຍ; ວຽກງານຫ້ອງມູນເຊື້ອ ແລະປະຫວັດສາດ. ຫຼັງຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງມູນເຊື້ອ ແລະ ປະຫວັດສາດຂອງສະພາແຫ່ງຊາດອີກດ້ວຍ.

ກ່ອນໜ້ານັ້ນຄືວັນທີ 22 ຕຸລາ, ກໍໄດ້ມີການພົບປະແລກປ່ຽນບົດຮຽນກ່ຽວກັບວຽກງານຫ້ອງມູນເຊື້ອລະຫວ່າງກົມສື່ມວນຊົນ ກັບ ກົມພິພິທະພັນໄກສອນ ພົມວິຫານ ແລະ ອະນຸສອນສະຖານຜູ້ນຳປະຕິວັດ, ຫ້ອງວ່າການສູນກາງພັກ ໂດຍການເຂົ້າຮ່ວມຂອງທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າກົມສື່ມວນຊົນ ເຊິ່ງມີຄະນະພະແນກ ແລະ ວິຊາການຂອງສອງພາກສ່ວນເຂົ້າຮ່ວມ ເຊິ່ງສອງຝ່າຍໄດ້ປຶກສາຫາລືກ່ຽວກັບການເກັບຂໍ້ມູນ, ຮູບພາບ, ເອກະສານຕ່າງໆກ່ຽວກັບການເຕີບໃຫຍ່ຂະຫຍາຍຕົວ, ການເຄື່ອນໄຫວຂອງສະພາແຫ່ງຊາດທີ່ໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະການເຄື່ອນໄຫວທາງດ້ານເສດຖະກິດ-ສັງຄົມ ເພື່ອຈະປະກອບເຂົ້າໃນການຈັດງານວາງສະແດງສະເຫຼີມສະຫຼອງວັນສະຖາປະນາ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ໃຫ້ມີເນື້ອໃນທີ່ອຸດົມສົມບູນ, ເຫັນໄດ້ຜົນງານອັນພົ້ນເດັ່ນໃນຂົງເຂດວຽກງານຂອງ ສພຊ; ຫຼັງຈາກການພົບປະ, ຍັງໄດ້ພ້ອມກັນຢ້ຽມຊົມສະຖານທີ່ຕົວຈິງອີກດ້ວຍ.

**(ນາງ ອາລິນ ສຸພົມມະປະດິດ ແລະ ນາງ ນິດຕາ ຄູນປາກດີ)**





ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 309 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 29/10/25

**ມະຕິ**

**ວ່າດ້ວຍການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX**

- ອີງຕາມ ມາດຕາ 55 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2024 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີ ແລະ ມາດຕາ 57 ກອງປະຊຸມທ້າຍສະໄໝ;
- ອີງຕາມ ແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 12/ຄປຈ, ລົງວັນທີ 28 ຕຸລາ 2025.

ເພື່ອຮັບປະກັນການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ບັນລຸຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີໃຫ້ດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເລີ່ມແຕ່ວັນທີ 10 ຫາ 21 ພະຈິກ 2025 ລວມ 10 ວັນ, ຢູ່ທີ່ສະພາແຫ່ງຊາດ ຫ້ອງ 2 ທັນວາ (ເບີ 202), ນະຄອນຫຼວງວຽງຈັນ.

**ມາດຕາ 2** ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ, ບັນດາພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 3** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**
**ປະທານ**

**ປອ ໄຊສົມພອນ ພົມວິຫານ**

ບ່ອນສົ່ງ:
- ບັນດາທ່ານ ສະມາຊິກສະພາແຫ່ງຊາດ 1 ສະບັບ;
- ບັນດາທ່ານ ຄະນະປະຈຳສະພາແຫ່ງຊາດ 1 ສະບັບ;
- ຫ້ອງວ່າການສູນກາງພັກ 1 ສະບັບ;
- ຫ້ອງວ່າການສຳນັກງານປະທານປະເທດ 1 ສະບັບ;
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ;
- ສານປະຊາຊົນສູງສຸດ 1 ສະບັບ;
- ອົງການໄອຍະການປະຊາຊົນສູງສຸດ 1 ສະບັບ;
- ອົງການກວດກາແຫ່ງລັດ 1 ສະບັບ;
- ອົງການກວດສອບແຫ່ງລັດ 1 ສະບັບ;
- ບັນດາກົງຈັກການຈັດຕັ້ງພາຍໃນສະພາແຫ່ງຊາດ 1 ສະບັບ.




## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ແຮມ ລາວເທວ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານສັນຍາປຣະເສີດ ປະທານກຳມາທິການການຕ່າງປະເທດ, ປະທານຄະນະສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF), ທ່ານ ຄາໂລຢານ ໂຄເລຟ (Kaloyan Kolev) ຜູ້ຕາງໜ້າຈາກອົງການຝຣັ່ງໂກໂຟນີສາກົນ (OIF) ແລະ ທ່ານ ຢີ ຈັນປຣາສນາ (Yi Chanprasnar) ຜູ້ຕາງໜ້າຈາກສູນລັດຖະສະພາອາຊີ (PCAsia), ເຂົ້າຮ່ວມມີບັນດາທ່ານຜູ້ແທນຈາກສປປລາວ, ກຳປູເຈຍ, ໄທ, ຫວຽດນາມ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ພ້ອມດ້ວຍກອງເລຂາ.

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ພ້ອມທັງຖອດຖອນບົດຮຽນເຊິ່ງກັນແລະກັນໃນການປະຕິບັດໜ້າທີ່ຂອງສະມາຊິກລັດຖະສະພາ ກ່ຽວກັບການມີສ່ວນຮ່ວມຂອງປະຊາຊົນ ແລະ ລັດຖະສະພາທີ່ເປີດກວ້າງ; ຮັບຟັງປະສົບການການປະຕິບັດວຽກງານຕົວຈິງຈາກບັນດາຊ່ຽວຊານທີ່ມີຊື່ສຽງ ແລະ ແລກປ່ຽນບົດຮຽນທີ່ດີທີ່ສຸດຮ່ວມກັນຂອງສະມາຊິກລັດຖະສະພາ; ເພື່ອໃຫ້ຄວາມສຳຄັນໃນການເສີມຂະຫຍາຍການຮ່ວມມື ແລະ ປະຕິບັດຕາມພັນທະຂອງສະມາຊິກ APF ໄດ້ຢ່າງຕໍ່ເນື່ອງ ທັງເປັນການເພີ່ມຄວາມຮັບຮູ້ກ່ຽວກັບສະພາບການຂອງພາກພື້ນ ແລະ ສາກົນ ທີ່ສະໜັບສະໜູນລັດຖະສະພາທີ່ເປີດກວ້າງ ແລະ ມີສ່ວນຮ່ວມຫຼາຍຂຶ້ນ.

ທ່ານ ສັນຍາ ປຣະເສີດ ມີຄຳເຫັນວ່າ: ລັດຖະສະພາມີພາລະກິດຮ່ວມກັນ ຄືການເປັນຕົວແທນຂອງປະຊາຊົນ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່ພື້ນຖານຂອງປະຊາທິປະໄຕ ຜ່ານການເປີດກວ້າງ, ການມີສ່ວນຮ່ວມ ແລະ ການຕອບສະໜອງທີ່ທັນເວລາ; ການເສີມສ້າງ ແລະ ຮັກສາຄວາມໄວ້ວາງໃຈລະຫວ່າງຜູ້ແທນທີ່ໄດ້ຮັບການເລືອກຕັ້ງ ກັບ ປະຊາຊົນ ແມ່ນສິ່ງສຳຄັນທີ່ສຸດ. ການມີສ່ວນຮ່ວມຂອງປະຊາຊົນຢ່າງແທ້ຈິງ, ການເຂົ້າເຖິງຂໍ້ມູນໄດ້ດີ ແລະ ການຕັດສິນໃຈຢ່າງມີສ່ວນຮ່ວມ ບໍ່ພຽງເປັນຫຼັກການຂອງປະຊາທິປະໄຕ, ແຕ່ຍັງເປັນເງື່ອນໄຂທີ່ຈຳເປັນຕໍ່ສັນຕິພາບ, ຄວາມໝັ້ນຄົງ ແລະ ການພັດທະນາທີ່ຍືນຍົງ. ກອງປະຊຸມຄັ້ງນີ້ເປັນເວທີປາໄສເພື່ອແລກປ່ຽນປະສົບການ, ແບ່ງປັນວິທີການທີ່ສ້າງສັນ ແລະ ຮຽນຮູ້ບົດຮຽນຮ່ວມກັນ ໃນການສົ່ງເສີມການປະຕິບັດລັດຖະສະພາທີ່ເປີດກວ້າງ. ທ່ານກ່າວຕື່ມວ່າ ສະພາແຫ່ງຊາດລາວ ໄດ້ຂະຫຍາຍຊ່ອງທາງການສື່ສານຜ່ານທາງໂທລະພາບ, ວິທະຍຸ ແລະ ເວທີດິຈິຕອນ ເພື່ອໃຫ້ການອະພິປາຍໃນສະພາ ແລະ ຂໍ້ມູນກົດໝາຍ ເຂົ້າເຖິງໄດ້ງ່າຍຂຶ້ນສຳລັບປະຊາຊົນ.

**(ສອນສັກ ວັນວິໄຊ)**





## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ຢ່າງກົງໄປກົງມາ, ມີປະຊາທິປະໄຕ ເຮັດໃຫ້ບັນຫາຕ່າງໆທີ່ຍົກຂຶ້ນໃນວາລະປະຊຸມ ໄດ້ຮັບການອະພິປາຍ ແລະ ມີຄວາມເປັນເອກະພາບກັນສູງດ້ານທັດສະນະ ແລະ ການຊີ້ນຳຈັດຕັ້ງປະຕິບັດຕົວຈິງຕໍ່ໄປ. ຄະນະບໍລິຫານງານສູນກາງພັກ ໄດ້ຕີລາຄາຢ່າງສັງລວມວ່າ ປີ 2025 ສະພາບການພາກພື້ນ ແລະ ສາກົນ ມີການຜັນແປໄປຢ່າງຕໍ່ເນື່ອງ, ສັບສົນ, ສົ່ງຜົນກະທົບ ແລະ ເກີດມີສິ່ງທ້າທາຍທົດສອບຫຼາຍດ້ານຕໍ່ການພັດທະນາເສດຖະກິດ-ສັງຄົມ; ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳຂອງສູນກາງພັກ ແລະລັດຖະບານ ກໍຄືຄວາມເປັນເຈົ້າການບຸກບືນສູ້ຊົນຂອງບັນດາຂະແໜງການ ແລະທ້ອງຖິ່ນ ຕະຫຼອດຮອດພະນັກງານ, ປະຊາຊົນບັນດາເຜົ່າ ໄດ້ມີຄວາມຕັດສິນໃຈເພື່ອສູ້ຊົນ, ຜ່ານຜ່າ ອັນໄດ້ເຮັດໃຫ້ປະເທດເຮົາຮັບປະກັນໄດ້ຄວາມໝັ້ນຄົງ, ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບປອດໄພ, ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄດ້ຮັບການແກ້ໄຂໃຫ້ຕົກໄປເປັນກ້າວໆ, ເສດຖະກິດມະຫາພາກຄ່ອຍໆມີສະຖຽນລະພາບດີຂຶ້ນ.

ບົນພື້ນຖານສະພາບການຕ່າງໆ ແລະ ຄວາມເລັ່ງທວງໃນສະເພາະໜ້າແລະຍາວນານ, ຄະນະບໍລິຫານງານສູນກາງພັກ, ລັດຖະບານ ແລະການນຳທຸກໆພາກສ່ວນ ທັງສູນກາງ ແລະ ທ້ອງຖິ່ນທຸກຂັ້ນ ຕ້ອງໄດ້ເພີ່ມທະວີ ແລະຍົກສູງຄວາມຮັບຜິດຊອບການເມືອງ ເພື່ອນຳພາ-ບັນຊາ-ຊີ້ນຳ ແກ້ໄຂບັນຫາຢ່າງມີແຜນການ ແລະ ມີຈຸດສຸມ ເປັນຕົ້ນແມ່ນການສືບຕໍ່ຍູ້ແຮງຂະບວນການດ້ານຕ່າງໆ ໃຫ້ແຂງແຮງ, ສ້າງການຫັນປ່ຽນໃໝ່ໃຫ້ເລິກເຊິ່ງ, ມີປະສິດທິຜົນ ເພື່ອມ້ວນທ້າຍການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ໃຫ້ມີຄວາມສົມບູນຍິ່ງຂຶ້ນ; ສືບຕໍ່ກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ; ພ້ອມທັງກະກຽມບັນດາວຽກງານ ເພື່ອຮອງຮັບໃຫ້ແກ່ການຜັນຂະຫຍາຍແນວທາງການເມືອງ ແລະແນວທາງການຈັດຕັ້ງຂອງພັກພາຍຫຼັງສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ.

ໂອກາດດັ່ງກ່າວ, ສະຫາຍທອງລຸນ ສີສຸລິດ ຍັງໄດ້ຊີ້ນຳວຽກງານຈຳນວນໜຶ່ງ ເພື່ອໃຫ້ຄະນະບໍລິຫານງານສູນກາງພັກ ກໍຄືບັນດາສະຫາຍເລຂາຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະບັນດາແຂວງ ນຳໄປຈັດຕັ້ງຜັນຂະຫາຍ ແລະ ສຸມໃສ່ຈັດຕັ້ງປະຕິບັດໃຫ້ມີປະສິດທິພາບສູງ ຄື:

1. ແກ້ໄຂບັນຫາເຄັ່ງຮ້ອນ ເປັນຕົ້ນ ບັນຫາເສດຖະກິດ-ການເງິນ, ລາຄາສິນຄ້າ, ຄ່າຄອງຊີບ; ຟື້ນຟູຜົນກະທົບຈາກໄພນ້ຳຖ້ວມທີ່ເກີດຂຶ້ນໃນລະດູຝົນຜ່ານມາ, ປັບປຸງ-ສ້ອມແປງເສັ້ນທາງຫຼວງແຫ່ງຊາດ ແລະ ເສັ້ນທາງເຊື່ອມຕໍ່ຕ່າງໆ, ເນື້ອທີ່ທຳການຜະລິດ, ຊົນລະປະທານ, ເໝືອງ-ຝາຍ, ແນວພັນເຂົ້າ, ແນວພັນພືດ ສະໜອງໃຫ້ປະຊາຊົນຢູ່ແຕ່ລະທ້ອງຖິ່ນ; ຊີ້ນຳ, ຕິດຕາມ, ຊຸກຍູ້ ແລະ ໃຫ້ເປັນເຈົ້າການແກ້ໄຂບັນຫາດ້ານເຕັກນິກ-ວິຊາການ ເພື່ອເກັບກູ້, ມ້ຽນມັດຜົນຜະລິດລະດູຝົນ ແລະ ກະກຽມໃຫ້ແກ່ຂະບວນການຜະລິດໃນລະດູແລ້ງ; ເອົາໃຈໃສ່ປະຕິບັດນະໂຍບາຍ, ເບິ່ງແຍງແລະຟື້ນຟູ-ແກ້ໄຂຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ໂດຍສະເພາະຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດຕ່າງໆ, ຜູ້ມີລາຍຮັບຕ່ຳ, ຜູ້ທຸກຍາກ-ດ້ອຍໂອກາດ.

2. ຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມໃຫຍ່ອົງຄະນະພັກນະຄອນຫຼວງ, ແຂວງ, ບັນດາກະຊວງ, ອົງການ ທີ່ສຳເລັດແລ້ວ, ທຸກວຽກງານຕ້ອງໄດ້ຮັບການສືບຕໍ່ດຳເນີນຫຼືເຄັ່ງຮ້ອນປັບປຸງໃຫ້ເຂົ້າສູ່ການປະຕິບັດໃຫ້ໄວຕໍ່ເນື່ອງ ບໍ່ໃຫ້ມີຮອຍຕໍ່, ຊ່ອງວ່າງໃດໆ ໃນການຊີ້ນຳ ແລະ ການບໍລິຫານວຽກງານ; ຢາກໃຫ້ເອົາໃຈໃສ່ຕື່ມ ໂດຍສະເພາະຂັ້ນແຂວງ, ຂັ້ນເມືອງ ແມ່ນ: ການປັບປຸງກົງໄກ, ລະບອບການນຳພາຊີ້ນຳ, ແບບແຜນວິທີເຮັດວຽກ ຂອງຄະນະບໍລິຫານງານພັກ, ຄະນະປະຈຳພັກ ກັບ ອົງການປົກຄອງ ເພື່ອຮັບປະກັນຄວາມຖືກຕ້ອງ, ຄ່ອງຕົວ, ໂລ່ງລ່ຽນ, ແກ້ໄຂບັນຫາໃຫ້ທັນການ, ບໍ່ຊັກຊ້າ, ບໍ່ໜື້ງກັນ. ມອບໃຫ້ຄະນະຈັດຕັ້ງສູນກາງພັກ ສົມທົບພາກສ່ວນກ່ຽວຂ້ອງ ກວດກາຕື່ມ, ຖ້າຈຳເປັນຄວນອອກນິຕິກຳເພື່ອຈັດຕັ້ງປະຕິບັດ ໃຫ້ເອກະພາບກັນໃນທົ່ວປະເທດແລະໃຫ້ເປັນເອກະພາບໄປລວງດຽວກັນ.

3. ຊີ້ນຳ, ກວດຄືນຜົນການປັບປຸງກົງຈັກການຈັດຕັ້ງພາຍຫຼັງຍຸບ, ໂຮມເຂົ້າກັນ ທັງສູນກາງ ແລະ ທ້ອງຖິ່ນ, ອັນໃດຍັງບໍ່ທັນຖືກທິດ, ເກາະກະ, ສ້າງບັນຫາ ແມ່ນເດັດດ່ຽວແກ້ໄຂໃຫ້ຕົກ, ຮັບປະກັນກົງຈັກກະທັດຮັດ, ມີຄຸນນະພາບ ແລະ ມີປະສິດທິພາບ ໃນການຂັບເຄື່ອນການປະຕິບັດໜ້າທີ່ການເມືອງຂອງແຕ່ລະການຈັດຕັ້ງ.

4. ຊີ້ນຳການກະກຽມຮອບດ້ານກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ບັນດາອະນຸກຳມະການຕ່າງໆ ຂຸ້ນຂ້ຽວສືບຕໍ່ຈັດຕັ້ງປະຕິບັດບັນດາໜ້າວຽກຂອງຕົນ ເປັນຕົ້ນ ປັບປຸງບັນດາເນື້ອໃນເອກະສານຕ່າງໆ, ການກະກຽມດ້ານໂຄງປະກອບບຸກຄະລາກອນ, ເປົ້າໝາຍເຂົ້າຮ່ວມກອງປະຊຸມ, ການກະກຽມບ່ອນປະຊຸມ, ການປະດັບປະດາ, ງົບປະມານ, ການປ້ອງກັນ ແລະ ອື່ນໆ ໃຫ້ຮັບປະກັນຄວາມປອດໄພແລະຜົນສຳເລັດຢ່າງຈົບງາມ.

5. ຊີ້ນຳການກະກຽມກອງປະຊຸມຄົບຄະນະວິສາມັນຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ເພື່ອດຳເນີນຊີວິດການເມືອງໝົດສະໄໝຂອງຄະນະບໍລິຫານງານສູນກາງພັກ ກໍຄືບຸກຄົນກຳມະການສູນກາງພັກ ສະໄໝທີ XI ທີ່ຍັງປະຈຳການ.

6. ສືບຕໍ່ຊີ້ນຳການກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ການກະກຽມດ້ານຕ່າງໆໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V.

7. ສືບຕໍ່ຊີ້ນຳການສະເຫຼີມສະຫຼອງວັນສຳຄັນຂອງພັກ, ຂອງຊາດ ເປັນຕົ້ນແມ່ນວັນສະຖາປະນາ ສປປລາວ ຄົບຮອບ 50 ປີ, ວັນເກີດຂອງປະທານໄກສອນ ພົມວິຫານ ຄົບຮອບ 105 ປີ, ງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ແລະ ອື່ນໆ ໃຫ້ເປັນຂະບວນການກວ້າງຂວາງ, ເນື້ອໃນເລິກເຊິ່ງ, ມີບັນຍາກາດຟົດຟື້ນ, ປະຢັດ, ຮັບປະກັນຄວາມສະ ຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ.

ໃນຕອນທ້າຍ, ສະຫາຍທອງລຸນ ສີສຸລິດ ໄດ້ສະແດງຄວາມເຊື່ອໝັ້ນແລະຮຽກຮ້ອງບັນດາສະຫາຍກຳມະການສູນກາງພັກ, ບັນດາສະຫາຍເລຂາຄະນະພັກກະຊວງ, ອົງການແລະທ້ອງຖິ່ນພ້ອມກັນຍົກສູງຄວາມຮັບຜິດຊອບການ ເມືອງ, ເຊີດຊູຄວາມເປັນເຈົ້າການ ແລະ ຄວາມເປັນແບບຢ່າງນຳໜ້າ ໃຫ້ສູງຂຶ້ນເພື່ອສືບຕໍ່ນຳພາຊີ້ນຳເຮັດໃຫ້ບັນດາຄາດໝາຍສູ້ຊົນຕ່າງໆທີ່ວາງອອກ ໄດ້ຮັບຜົນສຳເລັດອັນຈົບງາມ ແລະ ສ້າງຂະບວນການກ້າວເຂົ້າສູ່ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢ່າງສະຫງ່າຜ່າເຜີຍ.

**(ຂ່າວ-ພາບ: ຫສພ)**



## ພິທີ...

(ຕໍ່ຈາກໜ້າ 1)

ຊາດ, ມີບັນດາສະຫາຍໃນຄະນະພັກ ແລະ ຄະນະປະຈຳສະພາແຫ່ງຊາດ, ບັນດາສະຫາຍເລຂາ-ຮອງເລຂາຂອງບັນດາຮາກຖານພັກ, ຜູ້ຕາງໜ້າ 3 ອົງການຈັດຕັ້ງມະຫາຊົນ ແລະ ສະມາຊິກພັກສົມບູນທັງໝົດພາຍໃນສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ໄດ້ຜ່ານມະຕິ ແລະ ຂໍ້ຕົກລົງ ວ່າດ້ວຍການອະນຸມັດໃຫ້ພະນັກງານຮັບນະໂຍບາຍອຸດໜູນບຳນານ, ມະຕິວ່າດ້ວຍການຮັບຮອງເອົາໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນປະຈຳປີ 2024 ແລະ ຂໍ້ຕົກລົງວ່າດ້ວຍການຮັບຮອງອອກບັດສະມາຊິກພັກໃຫ້ສະມາຊິກພັກສົມບູນ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດທີ່ຍາດມາໄດ້ ເຊິ່ງສະແດງອອກໃນຈຳນວນໜ່ວຍພັກທີ່ໄດ້ຮັບນາມມະຍົດເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ໜ່ວຍພັກແຂງ ຈຳນວນ 13 ໜ່ວຍພັກໃນຈຳນວນ 18 ໜ່ວຍພັກທີ່ຂຶ້ນກັບຄະນະພັກສະພາແຫ່ງຊາດ ທັງຕີລາຄາສູງ ແລະ ຊົມເຊີຍ ຕໍ່ບັນດາພະນັກງານທີ່ເຮັດສຳເລັດໜ້າທີ່ການເມືອງຂອງຕົນ ແລະ ມີເງື່ອນໄຂຄົບຖ້ວນໃນການຮັບນະໂຍບາຍອຸດໜູນບຳນານຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກຈຳນວນ 5 ສະຫາຍ ແລະ ມອບ-ຮັບບັດສະມາຊິກພັກ ຈຳນວນ 40 ກວ່າສະຫາຍ. ພ້ອມນັ້ນ, ສະຫາຍຍັງໄດ້ມີຄຳເຫັນເນັ້ນໜັກວ່າ: ໃນໄລຍະນີ້ ເປັນໄລຍະປັບປຸງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ເຊິ່ງຄະນະບໍລິຫານງານພັກ ໄດ້ນຳພາການປັບປຸງກົງຈັກການຈັດຕັ້ງຂອງຕົນ ໂດຍສະເພາະການຄົ້ນຄວ້າໂຮມບັນດາກຳມາທິການຈຳນວນໜຶ່ງເຂົ້າກັນ, ປັບປຸງກົງຈັກຂັ້ນກົມ ແລະ ຂັ້ນພະແນກເພື່ອເຮັດໃຫ້ກົງຈັກມີຄວາມກະທັດຮັດ, ໂລ່ງລຽນ ຮັບປະກັນປະສິດທິຜົນຂອງວຽກງານ, ຮຽກຮ້ອງໃຫ້ພະນັກງານ-ລັດຖະກອນ ມີຄວາມອຸ່ນອຽນທຸ່ນທ່ຽງ, ຕັ້ງໜ້າເຝິກຝົນຫຼໍ່ຫຼອມຕົນເອງ, ມີຄວາມບຸກບືນໃນໜ້າທີ່ວຽກງານທີ່ການຈັດຕັ້ງໄດ້ມອບໝາຍໃຫ້ ເພື່ອກຽມພ້ອມເຂົ້າສູ່ການປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດຊຸດທີ່ຈະມາເຖິງ ໃຫ້ມີຜົນສຳເລັດຕາມຄາດໝາຍ; ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ-ລັດຖະກອນທີ່ຢູ່ໃນກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ໃຫ້ມີຄວາມອົດທົນ, ຕັ້ງໜ້າປະຕິບັດໜ້າທີ່ວຽກງານ, ຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກ ເພື່ອເຮັດໃຫ້ຊີວິດການເປັນຢູ່ໄດ້ຮັບການປັບປຸງດີຂຶ້ນ ດ້ວຍການເອົາໃຈໃສ່ການສ້າງເສດຖະກິດຄອບຄົວ, ຮູ້ປະຢັດມັດທະຍັດ, ບໍ່ຟຸມເຟືອຍ.

ສະຫາຍຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ ໄດ້ເນັ້ນໜັກວ່າ: ໃນຕໍ່ໜ້າ, ສະພາແຫ່ງຊາດຈະໄດ້ຕັ້ງໜ້າກະກຽມເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໃຫ້ທັນເວລາ ແລະ ມີຄຸນນະພາບສູງ; ສຸມໃສ່ກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ໄດ້ຮັບຜົນສຳເລັດ ໂດຍສະເພາະການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ, ບັນດາອະນຸກຳມະການ ໃຫ້ສຳເລັດໂດຍໄວ ເພື່ອຮັບປະກັນໃຫ້ການກະກຽມເລືອກຕັ້ງ ຕາມກຳນົດເວລາ.

**(ນາງ ອາລິນ ສຸພົມມະປະດິດ)**



# ທີມງານສະຫະພາບເອີຣົບ ຢ້ຽມຢາມ ແລະ ເຮັດວຽກຢູ່ ສພຂ ຄຳມ່ວນ



(ສພຂ) - ວັນທີ 16 ຕຸລາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ທ່ານ ນາງ ບົງອອນ ໄຊຍະສິດ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຢາມແລະເຮັດວຽກຂອງທ່ານ ຈ່ອງ-ກາບຼີແຢຣ ດຸສ(Mr.Jean-Gabriel Duss) ຜູ້ອຳນວຍການພາກພື້ນຂົງເຂດແມ່ນ້ຳຂອງແລະທ່ານນາງເວຍເລີສະເມັດ(Ms. Veerle Smet) ຫົວໜ້າຝ່າຍຮ່ວມມືຫ້ອງການສະຫະພາບເອີຣົບ ປະຈຳ ສປປ ລາວ ພ້ອມຄະນະ ເພື່ອພົບປະແລກປ່ຽນບົດຮຽນ ລະຫວ່າງຫ້ອງການສະຫະພາບເອີຣົບ ປະຈຳ ສປປລາວ ແລະ ສພຂ ຄຳມ່ວນ ກ່ຽວກັບບັນດາກິດຈະກຳທີ່ສະຫະພາບເອີຣົບ ໄດ້ໃຫ້ການສະໜັບສະໜູນ ໃນໄລຍະທີ່ຜ່ານມາ ຢູ່ແຂວງຄຳມ່ວນ.

ທ່ານ ນາງ ບົງອອນ ໄຊຍະສິດ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງ ຕໍ່ການພົວພັນຮ່ວມມືລະຫວ່າງ ສປປລາວ ແລະ ສະຫະພາບເອີຣົບ ໃນໄລຍະຜ່ານມາ ໂດຍສະເພາະແມ່ນການຊ່ວຍເຫຼືອຂອງສະຫະພາບເອີຣົບ ຕໍ່ ສປປລາວ ກໍຄືແຂວງຄຳມ່ວນ ໃນຫຼາຍຂົງເຂດວຽກງານ ທັງສະເໜີສືບຕໍ່ໃຫ້ການສະໜັບສະໜູນ ແກ່ແຂວງຄຳມ່ວນ ກໍຄື ສພຂ ໂດຍສະເພາະການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ວິຊາການ ໃນການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ອື່ນໆ ໃຫ້ມີປະສິດທິພາບ ແລະປະສິດທິຜົນດີຂຶ້ນກວ່າເກົ່າ; ພ້ອມນັ້ນ, ທ່ານຍັງໄດ້ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ ຂອງ ສພຂ ໃຫ້ຊາບ.

ທ່ານ ຈ່ອງ-ກາບຼີແຢຣ ດຸສ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນແລະສະແດງຄວາມຍ້ອງຍໍຊົມເຊີຍໃນການຈັດຕັ້ງປະຕິບັດວຽກງານຂອງ ສພຂ ຄຳມ່ວນ ໃນໄລຍະຜ່ານມາ ທັງແລກປ່ຽນຄຳຄິດຄຳເຫັນໃນການເພີ່ມທະວີການຮ່ວມມື, ການຈັດຕັ້ງປະຕິບັດວຽກງານ ແລະ ບັນດາກິດຈະກຳເຝິກອົບຮົມ ເປັນຕົ້ນການພັດທະນາຂີດຄວາມສາມາດທາງດ້ານນິຕິກຳ, ສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານເພດຍິງແລະວຽກງານຄຳຮ້ອງຄວາມເປັນທຳ.

**(ເອື້ອ ມະໂນສິງ)**

# ຕິດຕາມກວດກາປະເມີນຜົນ ການປະຕິບັດຂໍ້ຕົກລົງເຈົ້າແຂວງ




(ສພຂ) - ວັນທີ 13-14 ຕຸລາຜ່ານມາ ທີ່ສະໂມສອນເມືອງນາກາຍ ແຂວງຄຳມ່ວນ, ໄດ້ມີກອງປະຊຸມຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງທ່າແຂກສະບັບເລກທີ 376/ຈຂ, ລົງວັນທີ 20 ມີນາ 2023 ໂດຍການເປັນປະທານຂອງທ່ານບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄຳມ່ວນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ຮອງເຈົ້າແຂວງ ແຂວງຄຳມ່ວນ, ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ແລະ ທ່ານ ນາງ ບົວກາ ແກ້ວມະນີ ເລຂາພັກເມືອງນາກາຍ ແລະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງ 10 ຕົວເມືອງ; ມີບັນດາພະແນກການ, ຂະແໜງການທີ່ກ່ຽວຂ້ອງຂອງແຂວງຂອງເມືອງ, ພະນັກງານເສນາທິການຊ່ວຍວຽກຂອງສະພາປະຊາຊົນຂັ້ນແຂວງ ແລະແຂກຖືກເຊີນເຂົ້າຮ່ວມ.

ຈຸດປະສົງເພື່ອຕິດຕາມກວດກາ, ຊຸກຍູ້ຂະແໜງການທີ່ກ່ຽວຂ້ອງປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ ວ່າດ້ວຍການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງທ່າແຂກສະບັບເລກທີ 376/ຈຂ, ລົງວັນທີ 20 ມີນາ 2023 ໃຫ້ເຫັນດ້ານດີ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຂໍ້ຄົງຄ້າງແລະທິດທາງແກ້ໄຂໃນຕໍ່ໜ້າ ທັງປັບປຸງໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ຮັບປະກັນການຈັດຕັ້ງປະຕິບັດມາດຖານຍົກເມືອງທ່າແຂກໃຫ້ກ້າວສູ່ເປັນນະຄອນ ແລະ ຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່ ແນໃສ່ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນແຂວງ, ຕົວເມືອງທ່ານແຂກ ແລະ ເພື່ອເຮັດໃຫ້ບົດສະຫຼຸບຕີລາຄາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຄຳມ່ວນ ຊຸດທີ IV ມີເນື້ອໃນຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ແທດເໝາະກັບຕົວຈິງ.

ໃນກອງປະຊຸມ ໄດ້ຮັບຟັງຄວາມຄືບໜ້າການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ, ເນື້ອໃນລວມກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງແລະຮ່າງບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງວ່າດ້ວຍການຄຸ້ມຄອງ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງທ່າແຂກສະບັບເລກທີ376/ຈຂ, ລົງວັນທີ 20 ມີນາ 2023 ເຊິ່ງປະກອບມີ 14 ໝວດ, 49 ມາດຕາ; ຈາກນັ້ນ, ໄດ້ພ້ອມກັນປະກອບຄຳຄິດຄຳເຫັນ ເພື່ອເຮັດໃຫ້ມີເນື້ອໃນສອດຄ່ອງສົມບູນຂຶ້ນກວ່າເກົ່າ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການສ້າງຄວາມອາດສາມາດໃຫ້ແກ່ສະພາແຫ່ງຊາດ ມູນນິທິເວສມິນສະເຕີ ເພື່ອປະຊາທິປະໄຕ (WFD).

**(ເອື້ອ ມະໂນສິງ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9



(ສພຊ) -ວັນທີ 3 ຕຸລາຜ່ານມາ ທີ່ສະໂມສອນວິທະຍາໄລຄູສາລະວັນ, ພະນັກງານ-ລັດຖະກອນຂົງເຂດພັກ-ພະນັກງານ ໄດ້ຮັບຟັງການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ IV; ໂດຍການເຜີຍແຜ່ຂອງທ່ານ ຂັນໄຊ ຣັດຖະເຮົ້າ ຮອງຫານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ14ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ພົດສະໄໝ ເຂັມວິໄລ ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງ ເມືອງສາລະວັນ; ມີຄະນະຈັດຕັ້ງແຂວງ, ຫ້ອງວ່າການແຂວງ, ຄະນະໂຄສະນາອົບຮົມແຂວງ, ອົງການກວດກາລັດແຂວງ, ອົງການແນວລາວຊ້າງຊາດແຂວງ, ສະຫະພັນແມ່ຍິງແຂວງ, ຄະນະບໍລິຫານງານຊາວໜຸ່ມແຂວງ, ສະຫະພັນກຳມະບານແຂວງ, ສະຫະພັນນັກຮົບເກົ່າແຂວງ, ພະແນກການຕ່າງປະເທດແຂວງ, ໂຮງຮຽນການເມືອງ-ການປົກຄອງແຂວງດ 140 ກວ່າທ່ານເຂົ້າຮ່ວມ.

ທ່ານຂັນໄຊຣັດຖະເຮົ້າ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ9ຂອງ ສພຊ ຊຸດທີ IX ທີ່ໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຫຼາຍບັນຫາ ເປັນຕົ້ນນະໂຍບາຍຊຸກຍູ້ສົ່ງເສີມການກໍ່ສ້າງ ແລະ ສ້ອມແປງເສັ້ນທາງໃນໄລຍະໃໝ່; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດບັນດານະໂຍບາຍ, ນິຕິກຳ, ກົນໄກຕ່າງໆ ໃນການພັດທະນາພະລັງງານໄຟຟ້າ; ບົດລາຍງານຂອງລັດຖະບານ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ; ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9 ຂອງ ສພຊ ຊຸດທີ IX; ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ; ຈາກນັ້ນ, ທ່ານ ພົດສະໄໝ ເຂັມວິໄລ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ສາລະວັນ ຊຸດທີ IV ທີ່ໄດ້ພິຈາລະນາຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຂອງແຂວງ ເປັນຕົ້ນການປັບປຸງກົງຈັກການຈັດຕັ້ງຂອງອົງການປົກຄອງແຂວງ; ພິຈາລະນາ ແລະ ຮັບຮອງເອົາຊື່ອື່ນ ປະທານ-ຮອງປະທານຄະນະກຳມະການປົກຄອງຂັ້ນເມືອງ ແລະ ແຕ່ງຕັ້ງປະທານ ຄະນະກຳມະການປົກຄອງເມືອງ 8 ເມືອງ; ການຈັດຕັ້ງປະຕິບັດວຽກງານພົ້ນເດັ່ນກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນະເສດຖະກິດ-ສັງຄົມ, ແຜນງົບປະມານຂອງອົງການປົກຄອງແຂວງ; ການສ້າງນິຕິກຳທີ່ສຳຄັນຂອງແຂວງ 3 ສະບັບ; ການເຄື່ອນໄຫວ ແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ສາລະວັນ ຊຸດທີ IV.

ນອກນີ້, ຍັງໄດ້ຮັບຟັງຄຳສະເໜີ, ຄວາມຂັດຂ້ອງໝອງໃຈ ຂອງພະນັກງານ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງເພື່ອໄປຄົ້ນຄວ້າ ພິຈາລະນາ ແລະ ສະເໜີຕໍ່ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າແກ້ໄຂຕາມລະບຽບການ.

**(ຈັນທີ ດວງປັນຍາ)**

# ເຜີຍແຜ່ນິຕິກຳໃຕ້ກົດໝາຍ ຂົງເຂດສຶກສາທິການ ແລະ ກິລາ




(ສພຂ)-ວັນທີ 23-24 ຕຸລາຜ່ານມາ, ທ່ານ ກົງແກ້ວ ມີວໍລະຈັກປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ13, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍທ່ານ ຄຳປານ ເຄນວົງສັກ ສສຊປະຈຳເຂດເລືອກຕັ້ງທີ13, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າຮ່ວມກັບຄະນະພະແນກສຶກສາທິການ ແລະ ກິລາແຂວງ ໄດ້ເຄື່ອນໄຫວໂຄສະນາເຜີຍແຜ່ນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານການສຶກສາທິການ ແລະ ກິລາ ຢູ່ 4 ເມືອງ ຄື: ເມືອງໄຊບູລີ, ເມືອງອຸທຸມພອນ, ເມືອງອາດສະພອນ ແລະ ເມືອງອາດສະພັງທອງ ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຮັບຟັງຂອງເລຂາ-ຮອງເລຂາພັກເມືອງ, ຄະນະນຳຂອງເມືອງ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຄະນະນຳຫ້ອງການສຶກສາທິການ ແລະ ກິລາເມືອງ, ຄະນະຮັບຜິດຊອບວຽກງານການສຶກສາຂັ້ນບ້ານ, ຄະນະພັດທະນາການສຶກສາຂັ້ນບ້ານ, ອຳນາດການປົກຄອງບ້ານ, ຄູ-ອາຈານ ຕະຫຼອດຮອດພໍ່ແມ່ປະຊາຊົນ ແລະ ນ້ອງນັກຮຽນເຂົ້າຮ່ວມ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານໂດຍສັງເຂບຕໍ່ກັບວຽກງານການສຶກສາທິການ ແລະ ກິລາ ຂອງແຕ່ລະຈຸດໃນໄລຍະຜ່ານມາ; ຈາກນັ້ນ, ກໍຮັບຟັງການເຜີຍແຜ່ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະພັດທະນາການສຶກສາຂັ້ນບ້ານ ສະບັບເລກທີ 5707/ສສກ, ລົງວັນທີ 11 ຕຸລາ 2023; ຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການມີສ່ວນຮ່ວມຂອງສັງຄົມຕໍ່ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາທົ່ວແຂວງສະຫວັນນະເຂດ ສະບັບເລກທີ 535/ຈຂ, ລົງວັນທີ 1 ມີນາ 2024 ແລະ ຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ວ່າດ້ວຍການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດໃນສະຖານການສຶກສາທົ່ວແຂວງສະຫວັນນະເຂດ ສະບັບເລກທີ 1736/ຈຂ, ລົງວັນທີ 26 ສິງ 2025; ນອກນີ້, ຍັງໄດ້ຮັບຟັງການເຜີຍແຜ່ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະຜ່ານມາ ສະບັບເລກທີ 136/ສພຊ, ລົງວັນທີ 11 ທັນວາ 2024 ແລະ ເຜີຍແຜ່ ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໄລຍະຜ່ານມາ ສະບັບເລກທີ 24/ສພຂ.ສຂ, ລົງວັນທີ 25 ທັນວາ 2024; ພ້ອມນັ້ນ, ຍັງໄດ້ເປີດໂອກາດໃຫ້ມີການແລກປ່ຽນຄຳຄິດ-ຄຳເຫັນຢ່າງກົງໄປກົງມາຕໍ່ກັບຂົງເຂດວຽກງານການສຶກສາທິການ ແລະ ກິລາ ຕື່ມອີກ ເຊິ່ງບັນຫາທີ່ສະເໜີກໍໄດ້ໃຫ້ຄວາມກະຈ່າງແຈ້ງໃນແຕ່ລະບັນຫາ ເຮັດໃຫ້ຜູ້ເຂົ້າຮ່ວມຮັບຟັງມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບນິຕິກຳຕ່າງໆໃນຂົງເຂດສຶກສາທິການແລະກິລາຫຼາຍຂຶ້ນພ້ອມທັງເປັນການຊຸກຍູ້ສົ່ງເສີມການເຂົ້າໂຮງຮຽນຂອງນັກຮຽນ ແລະ ຫຼຸດຜ່ອນອັດຕາການປະລະການຮຽນຂອງນັກຮຽນຊັ້ນຕ່າງໆ.

ທ່ານ ກົງແກ້ວ ມີວໍລະຈັກ ໄດ້ຮຽກຮ້ອງໃຫ້ແຕ່ລະພາກສ່ວນຈົ່ງພ້ອມກັນ ສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນຄັ້ງນີ້ໃຫ້ກວ້າງຂວາງ, ເລິກເຊິ່ງຂຶ້ນດ້ວຍການສືບຕໍ່ລົງໂຄສະນາເຜີຍແຜ່ບັນດາເນື້ອໃນຈິດໃຈ ຂອງນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານການສຶກສາທິການ ແລະ ກິລາໃຫ້ເຂົ້າສູ່ລົງເລິກໃນການຈັດຕັ້ງປະຕິບັດວຽກງານຕົວຈິງໃຫ້ຖືກຕ້ອງສອດຄ່ອງຕາມຂອບເຂດສິດ, ພາລະບົດບາດ ແລະ ໜ້າທີ່ວຽກງານຂອງຕົນ ໃຫ້ປະສົມຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

**(ນາງຄອນສະຫວັນເມກສະຫວັນ)**

## ສພຂ ສາລະວັນ -ເຫວ້ ພົບປະແລກປ່ຽນບົດຮຽນຮ່ວມກັນ



(ສພຂ) - ກອງປະຊຸມພົບປະແລກປ່ຽນບົດຮຽນ ລະຫວ່າງ ຄະນະຜູ້ແທນຂັ້ນສູງ ສະພາປະຊາຊົນແຂວງ (ສພຂ) ສາລະວັນກັບຄະນະຜູ້ແທນຂັ້ນສູງສະພາປະຊາຊົນນະຄອນເຫວ້ ໄດ້ດຳເນີນໃນຕອນບ່າຍຂອງວັນທີ 22 ຕຸລາຜ່ານມາ ທີ່ຫ້ອງສະໂມສອນແຂວງສາລະວັນ; ສພຂ ສາລະວັນນຳໂດຍສະຫາຍສີເຣັງ ຫອມສິມບັດ ປະທານສະພາປະຊາຊົນແຂວງ; ຝ່າຍນະຄອນເຫວ້ ນຳໂດຍສະຫາຍ ຫງວຽນ ກວາງ ຕວັ່ນ ຄະນະປະຈຳພັກນະຄອນເຫ້ວ, ຮອງປະທານຜູ້ປະຈຳການສະພາປະຊາຊົນນະຄອນເຫວ້ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງທັງສອງຝ່າຍເຂົ້າຮ່ວມ; ເພື່ອສ້າງຄວາມເຂົ້າໃຈ ແລະ ຍົກລະດັບໃນການປະຕິບັດໜ້າທີ່ວຽກງານໃຫ້ມີຄວາມເຂັ້ມແຂງ, ບົນຈິດໃຈຄວາມຮັກແພງສາມັກຄີ, ເຊື່ອໝັ້ນວ່າການພົວພັນຮ່ວມມືລະຫວ່າງສອງສະພາປະຊາຊົນລາວ-ຫວຽດນາມ ຈະສືບຕໍ່ໄດ້ຮັບການເສີມຂະຫຍາຍມູນເຊື້ອອັນດີງາມ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ.

ກອງປະຊຸມໄດ້ຜັດປ່ຽນກັນລາຍງານ ສະພາບການພັດທະນາເສດຖະກິດ-ສັງຄົມ, ຈຸດພິເສດ, ທີ່ຕັ້ງຂອງແຂວງ, ພາລະບົດບາດ, ສິດ ແລະ ໜ້າທີ່ ການຈັດຕັ້ງປະຕິບັດວຽກງານຂອງສະພາປະຊາຊົນ ແລະ ຕີລາຄາສູງຕໍ່ບົດຮຽນການພົວພັນຮ່ວມມື, ການຊ່ວຍເຫຼືອ ລວມທັງການການຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳ ວ່າດ້ວຍການຮ່ວມມືໄລຍະ 2022-2026 ລະຫວ່າງຄະນະຜູ້ແທນຂັ້ນສູງແຂວງສາລະວັນກັບຄະນະຜູ້ແທນຂັ້ນສູງນະຄອນເຫວ້ ທີ່ລົງນາມຄັ້ງວັນທີ 27 ທັນວາ 2022 ທີ່ຜ່ານມາ; ພ້ອມນັ້ນ, ຍັງໄດ້ແລກປ່ຽນຂໍ້ມູນລົງເລິກຫຼາຍບັນຫາ ໂດຍສະເພາະນິຕິບັນຍັດ ບາດກ້າວ, ຂັ້ນຕອນ ການຈັດຕັ້ງປະຕິບັດ, ຄົ້ນຄວ້າພິຈາລະນາແລະທາບທາມຮ່າງລັດຖະທຳມະນູນ ແລະ ກົດໝາຍ; ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຢູ່ທ້ອງຖິ່ນ; ການຕົກລົງບັນຫາສຳຄັນພື້ນຖານຂອງຖິ່ນ ເປັນຕົ້ນການເມືອງແລະການປົກຄອງ, ເສດຖະກິດ, ການຈັດຕັ້ງແລະບຸກຄະລາກອນລວມທັງກົງຈັກທີ່ສະພາທ້ອງຖິ່ນຮັບຮອງ; ການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຄະນະປະຈຳສະພາແຫ່ງຊາດ, ມະຕິຂອງກອງປະຊຸມສະພາປະຊາຊົນແຂວງ, ມະຕິ ແລະ ຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ;

ພ້ອມນັ້ໜ, ສະຫາຍ ຫງວຽນ ກວາງ ຕວັ່ນ ຍັງໄດ້ມອບຈໍ LED ຂະໜາດ 160 cm x 256cm ໃຫ້ ສພຂ ສາລະວັນ ຕື່ມ.

**(ຈັນທີ ດວງປັນຍາ)**

# ປະທານ ສພຂ ສາລະວັນ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝວິສາມັນເທື່ອທີ 1




(ສພຂ) - ວັນທີ 16 ຕຸລາຜ່ານມາ, ທ່ານ ສີເຣັງ ຫອມສິມບັດປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14, ປະທານສະພາປະຊາຊົນແຂວງສາລະວັນ ໄດ້ເຄື່ອນໄຫວພົບປະຄະນະຄຸ້ມຄອງດ່ານສາກົນປາກຕະພານ ເມືອງລະຄອນເພັງ ຕິດພັນກັບການໂຄສະນາເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ1 ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ IV; ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມຂອງທ່ານຄຳສຸກແກ້ວວົງສອງ ຫົວໜ້າຄະນະຄຸ້ມຄອງດ່ານສາກົນປາກຕະພານ ເມືອງລະຄອນເພັງ; ມີທ່ານຫົວໜ້າພາສີຄຸ້ມຄອງດ່ານ, ຄະນະຫົວໜ້າກວດຄົນເຂົ້າ-ອອກເມືອງ ແລະ ພະນັກງານ-ລັດຖະກອນ ພາຍໃນດ່ານເຂົ້າຮ່ວມ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານ ເຊິ່ງສາມາດຍົກໃຫ້ເຫັນຜົນສຳເລັດ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ຂອງຄະນະຄຸ້ມຄອງດ່ານສາກົນປາກຕະພານ ເມືອງລະຄອນເພັງ ໄລຍະຜ່ານມາ ຈາກທ່ານ ຄຳສຸກ ແກ້ວວົງສອງ; ຈາກນັ້ນ, ທ່ານ ສີເຣັງ ຫອມສິມບັດ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງ ສພຂ ສາລະວັນ ຊຸດທີ IV ໂດຍທ່ານໃຫ້ຮູ້ວ່າ: ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງມີປະຊາທິປະໄຕ, ເລິກເຊິ່ງ, ມີຈຸດສຸມ, ເຈາະຈີ້ງ, ພາວະວິໄສ, ມີເຫດຜົນຕົວຈິງ ໂດຍໄດ້ຄົ້ນຄວ້າ, ພິຈະລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງແຂວງເປັນຕົ້ນການແຕ່ງຕັ້ງປະທານຄະນະກຳມະການປົກຄອງແຂວງ, ການແຕ່ງຕັ້ງບຸກຄະລາກອນຂອງອົງການປົກຄອງແຂວງ, ການສ້າງຕັ້ງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ, ການແຕ່ງຕັ້ງປະທານສານປະຊາຊົນແຂວງ ແລະ ຫົວໜ້າອົງການໄອຍາການແຂວງ; ຈາກນັ້ນ, ໄດ້ແລກປ່ຽນຄຳຄິດຄຳເຫັນ ແລະ ສະເໜີບາງບັນຫາຂໍ້ຫຍຸ້ງຍາກ ເພື່ອເປັນຂໍ້ມູນນຳໄປສະເໜີພາກສ່ວນທີ່ກ່ຽວຂ້ອງຊ່ວຍຫາທາງແກ້ໄຂ.

ຕໍ່ມາວັນທີ 21 ຕຸລາຜ່ານມາ, ທ່ານ ສີເຣັງ ຫອມສິມບັດ ໄດ້ເຄື່ອນໄຫວພົບປະຄະນະຄຸ້ມຄອງດ່ານສາກົນລະໄລເມືອງສະໜ້ອຍ ຕິດພັນກັບການໂຄສະນາເຜີຍແຜ່ມະຕິກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງ ສພຂ ສາລະວັນ ຊຸດທີ IV ຕື່ມ.

ພ້ອມນັ້ນ, ທ່ານ ສີເຣັງ ຫອມສິມບັດ ຍັງໄດ້ມອບມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງສາລະວັນ ສະບັບເລກທີ 247/ຄຈສຂ.ສວ, ລົງວັນທີ 18 ສິງຫາ 2025 ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຫົວໜ້າຄະນະຄຸ້ມຄອງດ່ານສາກົນປາກຕະພານ ເມືອງລະຄອນເພັງ ແກ່ທ່ານ ຄຳສຸກ ແກ້ວວົງສອງ ແລະ ມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງສາລະວັນ ສະບັບເລກທີ 246/ຄຈສຂ.ສວ ລົງວັນທີ 18 ສິງຫາ 2025 ວ່າດ້ວຍການຮັບຮອງເອົາການແຕ່ງຕັ້ງຫົວໜ້າຄະນະຄຸ້ມຄອງດ່ານສາກົນລະໄລ ເມືອງສະໜ້ອຍ ແກ່ທ່ານ ອູ່ທອງ ມູນລາສີ ຫົວໜ້າຄະນະຄຸ້ມຄອງດ່ານສາກົນລະໄລ ເມືອງສະໜ້ອຍ (ຄົນໃໝ່).

**(ດີລຳພົນ ພົມມະຈັນ)**

# ໜ່ວຍງານດ້ານການປົກຄອງ ຢ້ຽມຢາມ ແລະ ເຮັດວຽກຢູ່ ສພຂ ບໍລິຄຳໄຊ




(ສພຂ) - ເພື່ອປຶກສາຫາລືກ່ຽວກັບວິທີການເພີ່ມທະວີຂອບການຮ່ວມມືລະຫວ່າງ ສພຂ ແລະ ສະມາຄົມທີ່ບໍ່ຫວັງຜົນກຳໄລ ຂັ້ນແຂວງ ກ່ຽວກັບກົນໄກການມີສ່ວນຮ່ວມຂອງປະຊາຊົນແຂວງ, ການປະເມີນສິ່ງທ້າທາຍ ແລະ ໂອກາດ ໂດຍເນັ້ນໃສ່ການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນ ແລະ ການມີສ່ວນຮ່ວມກັບສະຖາບັນການປົກຄອງແລະວຽກງານຂອງສະມາຄົມທີ່ບໍ່ຫວັງຜົນກຳໄລ ໃນລະດັບທ້ອງຖິ່ນ; ວັນທີ 27 ຕຸລາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຢາມ ແລະ ເຮັດວຽກຮ່ວມຂອງ ທ່ານ ເຜັດສົມພອນ ສຸວັນວິໄຊ ຮອງຫົວໜ້າຫ້ອງການຄະນະຈັດຕັ້ງສູນກາງພັກ ພ້ອມຄະນະໜ່ວຍງານດ້ານການປົກຄອງ ແລະ ຄູ່ຮ່ວມພັດທະນາ; ມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ເລຂາທິການ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງໂດຍສັງເຂບແລະໄດ້ແລກປ່ຽນຄຳຄິດຄຳເຫັນ ໃນການເພີ່ມທະວີການຮ່ວມມື, ການຈັດຕັ້ງປະຕິບັດວຽກງານເປັນຕົ້ນວຽກງານສາຍດ່ວນ, ຄຳຮ້ອງຂໍຄວາມເປັນທຳ, ຄວາມຫຼາກຫຼາຍຂອງຊົນເຜົ່າ (ຄວາມຈຳກັດທາງດ້ານພາສາ), ການເຂົ້າເຖິງຂໍ້ມູນມີຄວາມຈຳກັດໂດຍສະເພາະຂັ້ນບ້ານ; ການສົ່ງເສີມສັກກະຍະພາບ ແລະ ບົດບາດຂອງສະມາຊິກສະພາເພດຍິງ ເພື່ອເປັນຂໍ້ມູນພື້ນຖານໃນການຈັດຕັ້ງປະຕິບັດວຽກງານງານຮ່ວມກັນໃນຕໍ່ໜ້າ.

**(ໂສລະຢ້ຳ-ລະອອງດາວ)**

# ສພຂ ຄຳມ່ວນ ຕິດຕາມກວດກາ ແລະ ຊຸກຍູ້ວຽກງານ




(ສພຂ)-ວັນທີ27-29 ຕຸລາຜ່ານມາ, ທ່ານ ນາງ ບົງອອນ ໄຊຍະສິດ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ພ້ອມດ້ວຍຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ໄດ້ເຄື່ອນໄຫວຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 8-9 ຂອງສະພາປະຊາຊົນແຂວງ (ສພຂ) ຄຳມ່ວນຕິດພັນກັບການແກ້ໄຂຄຳຮ້ອງ-ຄຳສະເໜີຂອງປະຊາຊົນ ຢູ່ເມືອງຄູນຄຳ ແລະ ເມືອງນາກາຍ; ທ່ານນາງ ກ້ອນແກ້ວ ຫຼວງໄຊມຸງຄູນ ກຳມະການຄະນະປະຈຳສະພາປະຊາຊົນຂັ້ນແຂວງ, ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າພ້ອມດ້ວຍຄະນະ; ໄດ້ເຄື່ອນໄຫວຕິດຕາມ, ກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ເທື່ອທີ 8-9 ຂອງ ສພຂ ຄຳມ່ວນ ຕິດພັນກັບການແກ້ໄຂຄຳຮ້ອງ-ຄຳສະເໜີຂອງປະຊາຊົນ ຢູ່ເມືອງຫີນບູນ; ໂດຍການຕ້ອນຮັບ ແລະ ເຂົ້າຮ່ວມເຮັດວຽກຂອງບັນດາທ່ານ ເລຂາພັກເມືອງ; ຮອງເລຂາພັກເມືອງ, ບັນດາທ່ານຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ/ຮອງຫົວໜ້າຫ້ອງການທີ່ກ່ຽວຂ້ອງ ແລະ ຕະຫຼອດຮອດແຂກຖືກເຊີນເຂົ້າຮ່ວມ.

ຈຸດປະສົງເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ແລະ 9 ຂອງ ສພຂ ຄຳມ່ວນຊຸດທີIVແລະການເຄື່ອນໄຫວວຽກງານ ຂອງອົງການລັດຂັ້ນເມືອງ ໃນການເຄົາລົບ ແລະ ຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການການລົງທຶນຂອງລັດ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອເປັນຂໍ້ມູນສັງລວມໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ຄຳມ່ວນ ຊຸດທີ IV ຄົ້ນຄວ້າພິຈາລະນາ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ປີ 2025 ແລະ ທິດທາງແຜນການ ປີ 2026 ຂອງເມືອງຫີນບູນ; ການຈັດຕັ້ງປະຕິບັດວຽກງານຂອງບັນດາຫ້ອງການທີ່ກ່ຽວຂ້ອງເປັນຕົ້ນຂົງເຂດວຽກງານເສດຖະກິດ, ແຜນການ ແລະ ການເງິນ; ຍຸຕິທຳ ແລະ ປກຊ-ປກສ ແລະ ຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; ທິດທາງແຜນການຈັດຕັ້ງປະຕິບັດວຽກງານຕໍ່ໜ້າ; ຈາກນັ້ນ, ໄດ້ພ້ອມກັນແລກປ່ຽນຄຳຄິດຄຳເຫັນ ແລະ ຕອບຂໍ້ຊັກຖາມຢ່າງກົງໄປກົງມາ ແລະ ພາວະວິໄສ ເພື່ອເປັນຂໍ້ມູນເບື້ອງຕົ້ນໃຫ້ແກ່ຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ, ສະມາຊິກສະພາປະຊາຊົນຂັ້ນແຂວງນຳໄປວິເຄາະວິໄຈ ແລະ ເປັນຂໍ້ມູນພື້ນຖານໃນການຄົ້ນຄວ້າປະກອບຄຳເຫັນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ຄຳມ່ວນ ຊຸດທີ IV ທີ່ຈະໄດ້ໄຂຂຶ້ນໃນຕໍ່ໜ້ານີ້.

ພ້ອມນັ້ນ, ຍັງໄດ້ຢ້ຽມຢາມແລະຊຸກຍູ້ວຽກງານຢູ່ໂຮງຮຽນປະຖົມຄູນແກ້ວ, ໂຄງການນໍ້າປະປາເມືອງຄູນຄຳ; ໂຮງຮຽນມັດທະຍົມສົມບູນໜອງບົວຄຳ ແລະ ຕິດຕາມໂຄງການກໍ່ສ້າງສ້ອມແປງເສັ້ນທາງໄປບ້ານນາຕານ ເມືອງນາກາຍ ແລະ ໂຮງຮຽນປະຖົມສົມບູນ ບ້ານໜອງຫອຍ ເມືອງຫີນບູນ ແຂວງຄຳມ່ວນ.

# ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ຄ້າຍຄຸມຂັງ-ດັດສ້າງ ນາໄຊ



(ສພຂ) - ວັນທີ 24 ຕຸລາຜ່ານມາ, ທ່ານ ສີເຮັງ ທອມສົມບັດ ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ, ປະທານສະພາປະຊາຊົນແຂວງສາລະວັນ ພ້ອມຄະນະໄດ້ເຄື່ອນໄຫວພົບປະເຈົ້າໜ້າທີ່ຕຳຫຼວດຄ້າຍຄຸມຂັງ-ດັດສ້າງນາໄຊ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ຕິດພັນກັບການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2025 ທັງເກັບກຳຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ນຳເຂົ້າຄົ້ນຄວ້າໃນກອງປະຊຸມຄົບຄະນະ ປະຈຳປີ 2025 ຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ; ໂດຍການຕ້ອນຮັບຂອງທ່ານ ພັທ. ກໍລະກັນ ບຸດໂທ ຫົວໜ້າຄ້າຍຄຸມຂັງ-ດັດສ້າງ ນາໄຊ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ມີຕາງໜ້າຈາກກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ພະແນກຍຸຕິທຳແຂວງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານສະພາບພະນັກງານ, ນັກໂທດ ແລະ ຜູ້ຖືກດັດສ້າງ ຢູ່ຄ້າຍຄຸມຂັງ-ດັດສ້າງນາໄຊ ໂດຍຫຍໍ້ ຈາກທ່ານ ພັທ. ກໍລະກັນ ບຸດໂທ ເຊິ່ງທ່ານໃຫ້ຮູ້ວ່າ: ຄະນະພັກ-ຄະນະບັນຊາໄດ້ເອົາໃຈໃສ່ປະຕິບັດວຽກງານຄຸ້ມຄອງປ້ອງກັນນັກໂທດ-ດັດສ້າງ ໄດ້ເປັນຢ່າງດີ, ມີການຈັດຕັ້ງການເວນຍາມປົກກະຕິແລະມີຄວາມສະຫງົບຮັບປະກັນຄວາມປອດໄພໄດ້ຮ້ອຍສ່ວນຮ້ອຍ, ມີຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ແນວທາງອັນຖືກຕ້ອງຂອງພັກ ແລະສຳນຶກໄດ້ຕໍ່ການກະທຳຜິດ ທັງເອົາໃຈໃສ່ນະໂຍບາຍເປັນຢ່າງດີ ຕໍ່ກັບນັກໂທດ-ດັດສ້າງທີ່ເຈັບເປັນ, ອະນຸຍາດໃຫ້ຍາດຢ້ຽມນັກໂທດຕາມລະບຽບຫຼັກການ, ມີການຄົ້ນຄວ້າສະເໜີອະໄພຍະໂທດປ່ອຍໂຕ, ຫຼຸດຜ່ອນໂທດ ແລະ ສະເໜີປ່ອຍໂຕກ່ອນກຳນົດ; ພ້ອມນັ້ນ,ຍັງໄດ້ສະເໜີບາງບັນຫາຕໍ່ ສສຊ ເພື່ອນຳໄປຄົ້ນຄວ້າຫາທາງແກ້ໄຂ ກັບພາກສ່ວນທີ່ກ່ຽວຂ້ອງເປັນຕົ້ນຂາດພາຫະນະຮັບໃຊ້ຂົນສົ່ງນັກໂທດ, ຢາປົວພະຍາດ, ອຸປະກອນການແພດ ແລະອື່ນໆ.

ທ່ານ ສີເຮັງ ທອມສົມບັດ ໄດ້ສະແດງຄວາມຍ້ອງຍໍ ແລະຊົມເຊີຍຕໍ່ຜົນສຳເລັດການປະຕິບັດໜ້າທີ່ຢ່າງຕັ້ງໜ້າ ແລະ ດ້ວຍຄວາມຮັບຜິດຊອບສູງທັງເນັ້ນໜັກໃຫ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ດຳເນີນການສືບສວນຕໍ່ຜູ້ຕ້ອງຫາ ແລະ ຜູ້ກະທຳຜິດ ໄປຕາມຂະບວນການຂອງກົດໝາຍແລະຍຸຕິທຳໂປ່ງໃສ; ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ປະກົດຜົນເປັນຈິງ; ອົງການໄອຍະການປະຊາຊົນແຂວງ ໃຫ້ສືບຕໍ່ເອົາໃຈໃສ່ຕິດຕາມດຳເນີນການສືບສວນສອບສວນ ແລະສັ່ງຟ້ອງຜູ້ຕ້ອງຫາຂຶ້ນສານຕາມຂະບວນການຂອງກົດໝາຍ ແລະ ປະສານງານກັບເຈົ້າໜ້າທີ່ ປກສ ປະຕິບັດໜ້າທີ່ ຄ້າຍຄຸມຂັງ-ດັດສ້າງ ໃຫ້ເປັນໄປຕາມກົດໝາຍ;ພະແນກຍຸຕິທຳແຂວງໃຫ້ຮີບຮ້ອນຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ; ສຳລັບຄ້າຍຄຸມຂັງ-ດັດສ້າງ ເອົາໃຈໃສ່ຍົກລະດັບການພັດທະນາຄ້າຍຄຸມຂັງ-ດັດສ້າງ ໃຫ້ໄດ້ມາດຕະຖານ, ຈຳແນກນັກໂທດໃຫ້ມີມາດຕະການທີ່ເໝາະສົມ ທັງໃຫ້ມີການບຳບັດຜູ້ຕິດຢາເສບຕິດ ແລະ ສ້າງວິຊາຊີບໃຫ້ນັກໂທດ ແລະ ຈັດຫາອຸປະກອນຕ່າງໆ ເພື່ອຮອງຮັບໃຫ້ແກ່ການປິ່ນປົວນັກໂທດໃຫ້ຖ່ວງທັນ.

**(ດີລຳພົນ ພົມມະຈັນ)**



# ສະພາປະຊາຊົນ ເພີ່ມທະວີສາຍພົວພັນ ແລະ ແລກປ່ຽນບົດຮຽນຮ່ວມກັນ



(ສພຂ) - ເພື່ອເພີ່ມທະວີສາຍພົວພັນມິດຕະພາບ, ຮັດແໜ້ນຄວາມສາມັກຄີ, ການພົວພັນຮ່ວມມືຂອງສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ໃຫ້ສືບຕໍ່ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ; ວັນທີ 25 ຕຸລາຜ່ານມາ, ຄະນະຜູ້ແທນສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ນຳໂດຍ ສະຫາຍ ສາຍທອງ ໄຊຍະວົງ ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15, ປະທານສະພາປະຊາຊົນແຂວງຈຳປາສັກ; ໄດ້ຕ້ອນຮັບການຢ້ຽມຢາມ ແລະ ເຮັດວຽກ ຂອງຄະນະຜູ້ແທນສະພາປະຊາຊົນນະຄອນເຫວ້ ແຫ່ງ ສສ.ຫວຽດນາມ ນຳໂດຍສະຫາຍ ຫງວຽນກວາງ ຕວັ໋ນ ຮອງປະທານຜູ້ປະຈຳການສະພາປະຊາຊົນນະຄອນເຫວ້.

ສະຫາຍ ສາຍທອງ ໄຊຍະວົງ ໄດ້ສະແດງຄວາມຕ້ອນຮັບ ແລະ ຕີລາຄາສູງ ຕໍ່ການມາເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້ ທັງລາຍງານສະພາບການພັດທະນາແຕ່ລະດ້ານຂອງແຂວງ ແລະ ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຂ ຈຳປາສັກ.

ສະຫາຍ ຫງວຽນ ກວາງ ຕວັ໋ນ ໄດ້ກ່າວສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ສະເໜີຈຸດປະສົງຂອງການມາເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ທັງລາຍງານສະພາບການລວມຂອງການພັດທະນາເສດຖະກິດ-ສັງຄົມ ທີ່ເຫັນໄດ້ໝາກຜົນຜົນງານອັນພົ້ນເດັ່ນທີ່ນະຄອນເຫວ້ ສາມາດຍາດໄດ້.

ຈາກນັ້ນ, ໄດ້ພ້ອມກັນປະກອບຄຳເຫັນ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໂດຍລົງເລິກໃສ່ວຽກງານ ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສພຂ ເພື່ອຍົກລະດັບໃນການປະຕິບັດໜ້າທີ່ວຽກງານໃຫ້ມີຄວາມເຂັ້ມແຂງໃນຕໍ່ໜ້າ.

ພ້ອມນັ້ນ, ຄະນະຜູ້ແທນນະຄອຣເຫວ້ຍັງໄດ້ມີພິທີມອບຈໍ LED ແກ່ ສພຂ ຈຳປາສັກ ຕື່ມອີກ.

**(ສົມວິຈິດ ໄຊມີນຕີ)**

# ຮັບຮອງເອົາການແຕ່ງຕັ້ງປະທານ-ຮອງປະທານ ແລະ ຄະນະກຳມະການປົກຄອງແຂວງ




(ສພຂ)-ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ເຊກອງ ຊຸດທີ IV ດຳເນີນໃນວັນທີ 8 ຕຸລາຜ່ານມາ ໂດຍການເປັນປະທານຂອງທ່ານ ດິງເຜັດ ພະຍິນ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ບຸນຫຼາຍ ບຸດທິເລຂາຄະນະບໍລິຫານງານພັກແຂວງ; ມີບັນດາທ່ານການນຳ-ອະດີດການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ເຂົ້າຮ່ວມ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການແຕ່ງຕັ້ງປະທານ, ຮອງປະທານ ແລະ ກຳມະການ ຄະນະກຳມະການປົກຄອງແຂວງ (ຫົວໜ້າພະແນກການ)ຕາມການສະເໜີ ຂອງຄະນະປະຈຳສະພາປະຊາຊົນແຂວງ ໃນນີ້, ຮັບຮອງເອົາການແຕ່ງຕັ້ງທ່ານ ຂັນຕີ ສີລະວົງສາ ເປັນປະທານຄະນະກຳມະການປົກຄອງແຂວງ; ທ່ານ ນາງ ສີສະຫງ່າ ແກ້ວດວງດີ ແລະ ທ່ານ ບຸນທະວີ ນະຄອນສິດ ເປັນຮອງປະທານຄະນະກຳມະການປົກຄອງແຂວງ; ຮັບຮອງເອົາການແຕ່ງຕັ້ງທ່ານ ສົມເພັດ ເອີດລັດດາ ເປັນຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ; ທ່ານ ນາງ ວິໄລວັນ ດາລາສິນ ເປັນຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ; ທ່ານ ຄຳໄພ ສົມມາວັດ ເປັນຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ; ທ່ານ ແກດ ດາລາແພງ ເປັນຫົວໜ້າພະແນກຍຸຕິທຳແຂວງ; ທ່ານຄຳຮູ້ ອ່ອນມະນີ ເປັນຫົວໜ້າພະແນກການເງິນແຂວງ; ທ່ານ ຄຳແສນ ພະສະແຫວງ ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ; ທ່ານ ຈັນໄທ ຄຳມະນີວົງ ເປັນຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ; ທ່ານ ນາງ ເພັດດາວອນ ວາດສະຫງ່າ ເປັນຫົວໜ້າຫ້ອງວ່າການແຂວງ; ທ່ານ ດຣ. ນາງ ລຳພັນ ໄຊຄຳມີ ເປັນຫົວໜ້າພະແນກສາທາລະນະສຸກແຂວງ; ທ່ານ ພົດສະໜາ ນິນທະນິນ ເປັນຫົວໜ້າພະແນກການຕ່າງປະເທດແຂວງ; ທ່ານສຸກດາວັນ ເລຫວຽດມ່ວງ ເປັນຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ; ທ່ານ ແກ້ວປະເສີດ ແກ້ວມະນີວົງ ເປັນຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ຮັບຮອງເອົາການແຕ່ງຕັ້ງທ່ານ ຄຳເພັດ ສອນຈະເລີນ ເປັນຫົວໜ້າຄະນະຄຸ້ມຄອງດ່ານສາກົນດາກຕະອອກ; ພ້ອມນີ້, ຍັງໄດ້ຮັບຮອງເອົາການແຕ່ງຕັ້ງທ່ານ ສາກົນ ພອນປະເສີດ ເປັນປະທານອົງການກວດກາລັດແຂວງ ແລະ ຮັບຮອງເອົາການແຕ່ງຕັ້ງທ່ານ ບຸນທັນ ຈູມຈັນທະວົງ ເປັນຫົວໜ້າອົງການໄອຍະການແຂວງ.

ທ່ານ ດິງເຜັດ ພະຍິນ ໄດ້ກ່າວວ່າ: ບັນດາທ່ານທີ່ໄດ້ຮັບການເລືອກຕັ້ງໃນຄັ້ງນີ້ ລ້ວນແຕ່ຖືກຕ້ອງຕາມຂັ້ນຕອນ ຂອງລັດຖະທຳມະນູນແລະກົດໝາຍ, ຮັບປະກັນມາດຖານເງື່ອນໄຂ ທັງເຊື່ອໝັ້ນວ່າ ບັນດາທ່ານທີ່ໄດ້ຮັບການເລືອກຕັ້ງແລະແຕ່ງຕັ້ງ ຈະອຸທິດເຫື່ອແຮງ, ສະຕິປັນຍາ, ຄວາມຮູ້ຄວາມສາມາດ ແລະ ຄວາມຮັບຜິດຊອບການເມືອງ ຂອງຕົນເຂົ້າໃນການປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍໃຫ້ມີຜົນສຳເລັດ ເພື່ອພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ຍືນຍົງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**(ສັນຍາ-ນາລີວັນ)**

# ຕິດຕາມກວດກາໂຄງການທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ



(ສພຂ) - ວັນທີ 2 ຕຸລາຜ່ານມາ, ທ່ານ ດິງເຜັດ ພະຍິນ ປະທານສະພາປະຊາຊົນແຂວງ ພ້ອມຄະນະສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ), ກອງບັນຊາການ ປກສ ແຂວງ, ອົງການປົກຄອງເມືອງ ພ້ອມດ້ວຍແໜງການທີ່ກ່ຽວຂ້ອງ ຂອງແຂວງ-ເມືອງ ໄດ້ຕິດຕາມກວດກາ ແລະ ເກັບກຳສະພາບຕົວຈິງ ຕາມຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ບ້ານກຸງຕາສິງ ເມືອງ ກະລຶມ ຕໍ່ກັບບໍລິສັດດວງຈະເລີນ.

ໃນການເຄື່ອນໄຫວຮັບຟັງການລາຍງານຂອງພໍ່ແມ່ປະຊາຊົນ ບ້ານກຸງຕາສິງ, ບໍລິສັດດວງຈະເລີນ ແລະ ເກັບກຳສະພາບຕົວຈິງ ຕາມຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ໂດຍສະເພາະບັນຫາທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ ເປັນຕົ້ນການໃຊ້ຄວາມຮຸນແຮງທຳລາຍຊັບສິນຂອງປະຊາຊົນ, ການຊົດເຊີຍ, ການໃຊ້ສິດອຳນາດຕ່າງໆກົດຂີ່ນາບຂູ່ປະຊາຊົນ, ຈຳກັດພື້ນທີ່ທຳມາຫາກິນ ແລະ ບັນຫາອື່ນໆ.

ທ່ານ ດິງເຜັດ ພະຍິນ ໄດ້ເນັ້ນໜັກໃຫ້ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ຊຸກຍູ້ຕິດຕາມກວດກາຄືນບັນດາບົດບັນທຶກສັນຍາແລະຂອບເຂດການສຳປະທານຂອງບໍລິສັດ, ປະສານສົມທົບກັນ ໃນການປະຕິບັດໜ້າທີ່ໂດຍໃຫ້ຢູ່ໃນຄວາມສະຫງົບເປັນພື້ນຖານ ທັງເປັນຂົວຕໍ່ລະຫວ່າງບໍລິສັດ ແລະ ປະຊາຊົນ ໃຫ້ມີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ແລະ ຢູ່ຮ່ວມກັນໂດຍສັນຕິ; ພ້ອມນັ້ນ, ທ່ານຍັງຮຽກຮ້ອງໃຫ້ບໍລິສັດ ແລະ ອົງການປົກຄອງບ້ານ ຈົ່ງສ້າງແຜນຮ່ວມກັນໃນການແກ້ໄຂບັນຫາ ເປັນແຕ່ລະໄລຍະ, ປະສານສົມທົບຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທັງມີສ່ວນຮ່ວມໃນການຊ່ວຍເຫຼືອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ດີຂຶ້ນ ແລະ ປະຊາຊົນກໍຕ້ອງເຄົາລົບຕໍ່ກົດລະບຽບຂອງບໍລິສັດ ໂດຍສະເພາະ ບໍ່ໃຫ້ລຸກລ້ຳຂອບເຂດຫວງຫ້າມທີ່ບໍລິສັດສຳປະທານ.

ພ້ອມນັ້ນ, ວັນທີ 16-17 ຕຸລາຜ່ານມາ, ທ່ານ ນາງ ຄຳເສັງ ທຸມມະວົງສາ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມຄະນະ ໄດ້ເຄື່ອນໄຫວຊຸກຍູ້ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນເສນາທິການ ຂອງຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງດາກຈຶງ ໃນຊຸດຕໍ່ໄປ ຕິດພັນກັບການຕິດຕາມກວດກາ ການເຊົ່າສຳປະທານທີ່ດິນ ຂອງກຸ່ມບໍລິສັດທີ່ມາລົງທຶນພັດທະນາຢູ່ເມືອງດາກຈຶງ ໂດຍການຕ້ອນຮັບຂອງທ່ານ ເພັງນາ ຈັນທະພອນ ເລຂາພັກເມືອງ, ຫົວໜ້າຄະນະ ສສຂ ປະ

ອ່ານຕໍ່ໜ້າ 11






# ບັນຫາປີ່ນອ້ອມໃນຫ້ອງຮຽນ

# ດົ້ນກົບເມກ

ເລື່ອງບັນຫາຄຸນນະພາບຂອງການສຶກສາ ຖ້າຟັງຝ່າຍຄູກໍຈະບອກວ່າ ນັກຮຽນບໍ່ເອົາໃຈໃສ່ເຮັດວຽກບ້ານ, ບໍ່ເອົາໃຈໃສ່ອ່ານໜັງສື; ຖ້າຟັງຈາກນັກຮຽນເຂົາຈະບອກວ່າ ຄູບາງຄົນບໍ່ເອົາໃຈໃສ່ການສິດສອນ, ເວລາຂຶ້ນຫ້ອງສອນກໍເລືອກສອນບາງຫົວຂໍ້, ບາງບົດ ທີ່ຕົນເຂົ້າໃຈ ຍົກຕົວຢ່າງ: ຄູສອນວັນນະຄະດີ-ພາສາລາວ ຊັ້ນມັດທະຍົມ ແຕ່ງກອນບໍ່ເປັນ ແລະ ບໍ່ສາມາດຕີຄວາມສຸພາສິດເລິກເຊິ່ງ ໃຫ້ນັກຮຽນໄດ້ເຂົ້າໃຈ ກໍຈະບໍ່ເລືອກສອນ ເຊິ່ງມັນພົວພັນໄປເຖິງເວລາຄູຮຽນສາຍອາຊີບຄູ ບໍ່ໄດ້ເອົາໃຈໃສ່ ບາດເວລາຈົບມາສອນ ກໍຈຶ່ງບໍ່ໄດ້ຄຸນນະພາບ; ຖ້າຟັງຝ່າຍຜູ້ປົກຄອງ ກໍຈະປະຖິ້ມໃຫ້ຄູຢ່າງດຽວ ໂດຍເວົ້າວ່າໄດ້ຈ່າຍຄ່າຮຽນແລ້ວ ຄູຕ້ອງເອົາໃຈໃສ່ອົບຮົມສິດສອນໃຫ້ໝົດສູ່ຢ່າງແມ່ນບໍ່? ດັ່ງນັ້ນ, ບັນຫາປີ່ນອ້ອມຄຸນນະພາບການສຶກສາຈຶ່ງໜີບໍ່ພົ້ນມື ແລະ ໜ້າທີ່ຜູ້ບໍລິຫານການສຶກສາ/ຜູ້ອຳນວຍການ ທີ່ຕ້ອງກວດເບິ່ງຄູວ່າເຂົາສອນດີແລ້ວບໍ່? ຄູເຂົ້າໃຈເລິກເຊິ່ງໃນວິຊາທີ່ເຂົ້າສອນແລ້ວບໍ່? ນັກຂຽນໄດ້ເອົາໃຈໃສ່ບົດຮຽນແລ້ວບໍ່? ຜູ້ປົກຄອງເດ ເວລານັກຮຽນກັບມາເຮືອນ ໄດ້ໃຫ້ເວລາເຂົາຮຽນເພີ່ມບໍ່? ພໍ່ແມ່ຜູ້ປົກຄອງໄດ້ສົ່ງເສີມນັກຮຽນຫຼາຍໜ້ອຍພຽງໃດ?

ບັນດາທ່ານຜູ້ອ່ານຄົງໄດ້ຮັບຮູ້ຂ່າວເກີດໃນສັງຄົມ ທີ່ມີ ສສຊ ບາງທ່ານສະເໜີວ່າ: ບໍ່ຄວນອອກໜັງສືຜ່ານແດນໃຫ້ນັກຮຽນ ຖ້າຮຽນບໍ່ຈົບມັດທະຍົມ ເຊິ່ງເປັນຄຳເຫັນທີ່ໜ້າຄິດນໍ!

ສັງລວມໄດ້ວ່າ: ບັນຫາປີ່ນອ້ອມຄຸນນະພາບການສຶກສາ ແມ່ນທຸກຝ່າຍຕ້ອງເອົາໃຈໃສ່ຮ່ວມກັນ, ສຳຄັນແມ່ນຜູ້ມີໜ້າທີ່ໂດຍກົງຕ້ອງຮູ້ບົດບາດຕົນເອງດີ ບໍ່ແມ່ນວ່າເຮັດຕາມໃຈ ບໍ່ເຮັດຕາມພາລະບົດບາດ ຫຼື ບໍ່ອ່ານຮູ້ໜ້າທີ່ຕົນເອງ, ຄູບໍ່ມີຄວາມຮູ້ໃນວິຊາທີ່ຕົນເອງສອນ, ພໍ່ແມ່ບໍ່ສົ່ງເສີມ, ນັກຮຽນບໍ່ຕັ້ງໃຈຮຽນນັ້ນ ກໍຍາກທີ່ຈະແກ້ໄຂຝ່າຍດຽວ; ສັງເກດວ່າຫຼາຍໜ່ວຍງານປະຊຸມຢູ່ເລື້ອຍໆ ແຕ່ຍັງບໍ່ເກີດຜົນເທົ່າທີ່ຄວນນໍ! ສະເໜີແລກປ່ຽນ.

# ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງ ສະພາປະຊາຊົນແຂວງໄຊສົມບູນ ຊຸດທີ IV




(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາປະຊາຊົຈແຂວງ (ສພຂ) ໄຊສົມບູນ ໄດ້ດຳເນີນຂຶ້ນໃນວັນທີ 1 ຕຸລາຜ່ານມາ ທີ່ສະໂມສອນໃຫຍ່ເມືອງອະນຸວົງ ພາຍໃຕ້ການເປັນປະທານຂອງທ່ານ ແດງ ປະທຸມທອງ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ພອຍຄຳ ຮຸ່ງບຸນຍວງ ເຈົ້າແຂວງ ແຂວງໄຊສົມບູນ ພ້ອມດ້ວຍຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ອົງການ, ກົມກອງ ແລະບັນດາລັດວິສາຫະກິດອ້ອມຂ້າງແຂວງໄຊສົມບູນເຂົ້າຮ່ວມ.

ທ່ານ ແດງ ປະທຸມທອງ ໄດ້ກ່າວສູນທອນພິດໄຂກອງປະຊຸມຢ່າງເປັນທາງການ; ຈາກນັ້ນ, ຕາງໜ້າຄະນະປະຈຳສະພາປະຊາຊົນແຂວງ ໄດ້ສະເໜີການແຕ່ງຕັ້ງປະທານ-ຮອງປະທານ ຄະນະກຳມະການປົກຄອງແຂວງ, ຫົວໜ້າພະແນກການ, ອົງການ, ປະທານຄະນະກຳມະການປົກຄອງເມືອງ ຕາມລຳດັບ; ຈາກນັ້ນ, ບັນດາທ່ານ ສສຊ-ສສຂ ໄດ້ພ້ອມກັນປະກອບຄຳຄິດ-ຄຳເຫັນ ແລະ ນຳພາລົງຄະແນນສຽງ ຮັບຮອງເອົາ ເຊິ່ງສາມາດພິຈາລະນາຮັບຮອງ ເອົາບຸກຄະລາກອນເຂົ້າໃນກົງຈັກ ທີ່ສຳຄັນຂອງຄະນະກຳມະການປົກຄອງຂັ້ນແຂວງ ແລະ ຄະນະກຳມະການປົກຄອງຂັ້ນເມືອງຄື: ຮັບຮອງເອົາການແຕ່ງຕັ້ງ ທ່ານ ພົຈວ ບົວພັນ ອິນທະປັນຍາເປັນປະທານຄະນະກຳມະການປົກຄອງ ແຂວງໄຊສົມບູນ, ທ່ານ ນາງ ເພັດສະໄໝ ໂພໄຊຍະວົງ ເປັນຮອງປະທານຄະນະກຳມະການປົກຄອງແຂວງ ແລະ ທ່ານ ປອ. ທອງປະເສີດ ໄຊຍະລາດ ເປັນຮອງປະທານຄະນະກຳມະການປົກຄອງແຂວງໄຊສົມບູນ ແລະ ຮັບຮອງເອົາການແຕ່ງຕັ້ງຫົວໜ້າພະແນການ, ອົງການທຽບເທົ່າພະແນກຄື: ທ່ານ ອຸດອນ ສິງດາລາ ເປັນປະທານອົງການກວດກາພັກ-ລັດແຂວງ, ທ່ານ ວັນຄຳເກັ່ງ ຢ່າຊົງກົວ ເປັນຫົວໜ້າຫ້ອງວ່າການແຂວງ, ທ່ານ ຮືທໍ່ ເຜຍຫຼວງ ເປັນຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ, ທ່ານ ໄຊຍະວົງ ຈິດຕະວົງ ເປັນຫົວໜ້າພະແນກການເງິນແຂວງ, ທ່ານ ຜາທໍ່ ຕົ່ງເຢີທໍ່ ເປັນຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ທ່ານ ພຸດລຳໄພ ທຽມພຣະສອນ ເປັນຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ທ່ານ ດົວຊົ່ງ ເລ່ຍໂກ້ ເປັນຫົວໜ້າພະແນກວັດທະນະທຳ ແລະ ທ່ອງທ່ຽວແຂວງ, ທ່ານ ທົງສະຫວັນ ໂພສະລາດ ເປັນຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານແຂວງ; ພ້ອມນັ້ນຍັງໄດ້ຮັບຮອງເອົາການແຕ່ງຕັ້ງປະທານຄະນະກຳມະການປົກຄອງເມືອງ ຄື: ຮັບຮອງເອົາການແຕ່ງຕັ້ງທ່ານ ສົມບູນ ຄຳຕາງ ເປັນປະທານຄະນະກຳມະການປົກຄອງເມືອງອະນຸວົງ, ທ່ານ ວຽງມະນີ ຢົ່ງລໍ່ຢ່າງ ເປັນປະທານຄະນະກຳມະການປົກຄອງ ເມືອງຮົ່ມ.

**(ນາງ ອຳໄພພອນ ແກ້ວວິໄລ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທານ ແລະ ຮອງປະທານກຳມາທິການ ສພຊ, ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ), ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ຮອງປະທານອົງການກວດກາແຫ່ງລັດ, ປະທານສານທະຫານຂັ້ນສູງ, ຫົວໜ້າອົງການໄອຍະການທະຫານຂັ້ນສູງ, ປະທານສະພາທະນາຍຄວາມ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກມຍທ, ຄະນະກົມ, ຄະນະພະແນກແລະພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ທຸມມາລີ ວົງພະຈັນ ກ່າວວ່າ: ກອງປະຊຸມຄັ້ງນີ້ເພື່ອຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳປີ 2025 ແລະທິດທາງແຜນການປີ 2026 ແລະ ບົດສະຫຼຸບຕີລາຄາການເຄື່ອນໄຫວວຽກງານ 5 ປີ (2021-2025) ຂອງກຳມາທິການຍຸຕິທຳ ແລະ ທິດທາງແຜນວຽກຈຸດສຸມ 5 ປີ (2026-2030) ກ່ຽວກັບວຽກງານຍຸຕິທຳ; ຮັບຟັງຮ່າງບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025), ທິດທາງແຜນການ 5 ປີຕໍ່ໜ້າ, ປະຈຳປີ 2025 ແລະທິດທາງແຜນການປີ2026 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ທີ່ຈະນຳສະເໜີຕໍ່ກອງປະຊຸມສະໄໝສະມັນເທື່ອທີ 10 ຂອງສະພາແຫ່ງຊາດ; ການປະກອບຄຳເຫັນຈາກກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ອົງການບໍລິຫານລັດ (ຫສນຍ) ແລະ ອົງການກວດກາແຫ່ງລັດ ກ່ຽວກັບການແກ້ໄຂຄຳຮ້ອງຂໍຄວາມເປັນທຳ ແລະການແກ້ໄຂຄຳສະເໜີ ໃນຂອບເຂດຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ.

ບັນດາຜູ້ແທນກອງປະຊຸມ ໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ, ປະກອບຄຳເຫັນຢ່າງມີຈຸດສຸມ ແລະ ເລິກເຊິ່ງ ເພື່ອເປັນພື້ນຖານໃຫ້ກຳມາທິການຍຸຕິທຳນຳໄປຄົ້ນຄວ້າ, ປັບປຸງບັນດາເອກະສານຂອງກອງປະຊຸມຄັ້ງນີ້ ໃຫ້ຄົບຖ້ວນ, ຖືກຕ້ອງກັບສະພາບຄວາມເປັນຈິງ ແລະ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດສະແດງຄວາມຍ້ອງຍໍຊົມເຊີຍ ແລະຕີລາຄາສູງຕໍ່ບັນດາຜົນສຳເລັດໃນການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ການກຳນົດທິດທາງໃນຕໍ່ໜ້າຂອງແຕ່ລະພາກສ່ວນທັງມີບາງຄຳເຫັນເນັ້ນໜັກໃຫ້ສືບຕໍ່ປັບປຸງບົດສະຫຼຸບ ແລະ ທິດທາງແຜນການປະຈຳປີ, 5 ປີ ຂອງກຳມາທິການຍຸຕິທຳ ກໍຄືບົດສະຫຼຸບ ແລະ ທິດທາງແຜນການ 5 ປີ ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃຫ້ມີຄວາມຄົບຖ້ວນສົມບູນ, ຈະແຈ້ງ ແລະ ຮັດກຸມຕື່ມເພື່ອກຽມຄວາມພ້ອມຮອບດ້ານໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX; ເພີ່ມທະວີການປະສານສົມທົບລະຫວ່າງກຳມາທິການຍຸຕິທຳ ກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ໃນການປັບປຸງຂໍ້ຕົກລົງຮ່ວມ ເພື່ອເປັນບ່ອນອີງໃຫ້ແກ່ການຄົ້ນຄວ້າແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ເປັນລະບົບ ແລະ ມີຄວາມເປັນເອກະພາບສູງ ທັງປັບປຸງກົນໄກ, ແບບແຜນວິທີເຮັດວຽກລະຫວ່າງພາກສ່ວນທີ່ກ່ຽວຂ້ອງໃນການພິຈາລະນາແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ໃຫ້ມີຄວາມໄລ່ລຽນ, ວ່ອງໄວ, ຮັບປະກັນໃຫ້ການແກ້ໄຂຄະດີ ມີຄວາມຄົບຖ້ວນ, ຮອບດ້ານ, ພາວະວິໄສ, ຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຄວາມເປັນຈິງ, ຮັບປະກັນຄວາມຍຸຕິທຳໃນສັງຄົມ.

**(ນາງ ກຸກກິກ ບຸດດາໄຊ)**



## ຫາລື...

(ຕໍ່ຈາກໜ້າ 1)

2026-2030 ກໍຄືແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ມີຄວາມເໝາະສົມ, ຖືກຕ້ອງ ຕາມຂັ້ນຕອນຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ທັງເປັນການຢັ້ງຢືນບັນດາຄວາມພ້ອມຂອງຮ່າງກົດໝາຍທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງ ສພຊ ຊຸດທີ X ໃຫ້ສຳເລັດຕາມແຜນການ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການຜ່ານຮ່າງແຜນການສ້າງ ແລະ ປັບປຸງກົດໝາຍ 5 ປີ (2026-2030) ທີ່ຜ່ານການຄົ້ນຄວ້າ, ສັງລວມໜັງສືສະເໜີ ແລະ ການຢັ້ງຢືນຄວາມກຽມພ້ອມຂອງບັນດາອົງການທີ່ມີສິດສະເໜີສ້າງ ແລະປັບປຸງກົດໝາຍ ເຊິ່ງມີກົດໝາຍ 90 ສະບັບ, ໃນນີ້ສ້າງໃໝ່ 20 ສະບັບ; ປະກອບຄຳເຫັນຕໍ່ການກະກຽມຄວາມພ້ອມຂອງຮ່າງກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

ຕະຫຼອດອາຍຸການຂອງສະພາແຫ່ງຊາດ ຊຸດທີ IX ສາມາດສ້າງ ແລະ ປັບປຸງກົດໝາຍໄດ້ທັງໝົດ 87 ສະບັບ, ໃນນັ້ນສ້າງໃໝ່ 24 ສະບັບ, ພິເສດ ຍັງໄດ້ຄົ້ນຄວ້າປັບປຸງ ແລະ ສະເໜີກອງປະຊຸມສະໄໝວິສາມັນເທື່ອທີ 2 ພິຈາລະນາຮັບຮອງເອົາລັດຖະທຳມະນູນ (ສະບັບປັບປຸງປີ 2025); ຮອດປັດຈຸບັນ ສປປ ລາວ ມີກົດໝາຍ 176 ສະບັບ.

**(ນາງ ກຸກກິກ ບຸດດາໄຊ)**



## ສຸກສະບາຍຫາຍໂຣຄາ

# ອາການເສບຕິດກາເຟ ແລະ ວິທີການແກ້ເບື້ອງຕົ້ນ

\# ຮຽບຮຽງໂດຍ: ທິວກະທິ

ຫາກທ່ານຮູ້ໂຕວ່າເປັນຄົນມັກກິນກາເຟແລະຕ້ອງກິນທຸກມື້ ເພື່ອໃຫ້ຮ່າງກາຍຕື່ນໂຕພ້ອມທີ່ຈະເຮັດວຽກ ອາດຈະດື່ມ 1-2 ຈອກຕໍ່ມື້ ລະວັງທ່ານຈະຕິດກາເຟແບບບໍ່ຮູ້ໂຕ ກວ່າຊິຮູ້ກໍຕໍ່ເມື່ອມື້ໃດບໍ່ໄດ້ດື່ມກາແລ້ວຮູ້ສຶກເຈັບຫົວ, ບໍ່ສົດຊື່ນ, ຈິດໃຈບໍ່ເປັນສຸກ ນັ້ນເປັນອາການ "ຖອນຄາເຟອີນ" (Caffeine withdrawal)ອັນເນື່ອງມາຈາກການດື່ມກາເຟຫຼາຍເກີນໄປ ເພາະວ່າຄາເຟອີນເປັນສານເຄມີຫຼັກໃນກາເຟທີ່ຊ່ວຍກະຕຸ້ນລະບົບປະສາດເຮັດໃຫ້ສະໝອງແຈ່ມໃສ, ກະຕືລືລົ້ນ, ວ່ອງໄວ, ບໍ່ເຫງົານອນ ແລະ ຍັງມີຄວາມເປັນຢາເສບຕິດຢູ່ເລັກນ້ອຍ.

ອາການຖອນຄາເຟອີນປະກອບດ້ວຍອາການເຈັບຫົວເຊິ່ງພົບຫຼາຍທີ່ສຸດ ແລະ ມີຄວາມ



ຮຸນແຮງແຕກຕ່າງກັນໃນແຕ່ລະຄົນ ມັກມີອາການອ່ອນເພຍ, ບໍ່ມີແຮງ, ຫງ່ວມເຫງົາ, ມຶນງົງ, ມັກຫາວນອນ ແລະ ສະໝອງບໍ່ປອດໂປ່ງ ຮູ້ສຶກປວດເມື່ອຍຕົນໂຕ, ມີອາການຊຶມເສົ້າ, ບໍ່ມີສະມາທິ, ໃຈຮ້າຍ, ໂມໂຫງ່າຍແລະ ວິນຫົວປວດຮາກ.

ຄວາມຮຸນແຮງຂອງການເສບຕິດຄາເຟອີນ ຂຶ້ນກັບປະລິມານການດື່ມໃນແຕ່ລະມື້ ຍິ່ງດື່ມຫຼາຍ ອາການກໍຍິ່ງຮຸນແຮງຂຶ້ນຫາກບໍ່ໄດ້ດື່ມແລະສາມາດເກີດຂຶ້ນໄດ້ເຖິງວ່າເຈົ້າຈະກິນມື້ລະຈອກກໍຕາມອາການເສບຕິດຄາເຟອີນຈະສົ່ງຜົນເສຍຕໍ່ສຸຂະພາບ ແລະ ຈິດໃຈ ແລະ ອາດກໍໃຫ້ເກີດບັນຫາສຸຂະພາບໄລຍະຍາວໄດ້ເຊັ່ນດຽວກັນ ເປັນຕົ້ນຄວາມ ດັນເລືອດສູງ, ກະດູກຜ່ອຍ ແລະ ໂລກຕັບ.

**ວິທີແກ້ການເສບຕິດກາເຟເບື້ອງຕົ້ນ:**

**1. ຢ່າຢຸດກາເຟໃນທັນທີ**

ໃຫ້ຄ່ອຍຫຼຸດປະລິມານການດື່ມກາເຟລົງມື້ລະເລັກລະໜ້ອຍ ແຕ່ຢ່າຢຸດ ຫຼື ຫຼຸດລົງຢ່າງກະທັນຫັນ ເພາະຈະພາໃຫ້ເກີດອາການຖອນກາເຟອີນ

**2. ຢຸດການດື່ມກາເຟອີນຈາກແຫຼ່ງອື່ນ**

ຢ່າລືມວ່າກາເຟອີນມີຢູ່ໃນອາຫານແລະເຄື່ອງດື່ມຕ່າງໆ ເຊັ່ນ: ແປັບຊີ, ເຄື່ອງດື່ມຊູກໍາລັງ... ຖ້າຫາກຢາກຫຼຸດການດື່ມກາເຟແລ້ວ ຕ້ອງຫຼຸດການດື່ມເຄື່ອງດື່ມ ແລະ ອາຫານທີ່ມີຄາເຟອີນນໍາເຊັ່ນດຽວກັນ.

**3.ດື່ມກາເຟທີ່ບໍ່ມີສານຄາເຟອີນ**

ອີກໜຶ່ງທາງເລືອກກໍຄືການຊອກຫາກາເຟທີ່ບໍ່ມີສານຄາເຟອີນມາດື່ມແທນ ເພາະກາເຟປະເທດນີ້ກະມີການແຕ່ງກິ່ນລົດຊາດໃກ້ຄຽງກັບຄາເຟອີນ ແຕ່ຈະມີກາເຟອີນໜ້ອຍກວ່າກາເຟປົກກະຕິເຖິງ 97% ນໍາມາດື່ມສະຫຼັບກັບກາເຟປົກກະຕິກໍຈະຊ່ວຍໃຫ້ເຊົາກາເຟໄດ້ໄວຂຶ້ນ.

**4. ຫາເຄື່ອງດື່ມອື່ນມາທົດແທນ**

ລອງປ່ຽນມາດື່ມຊາສະມຸນໄພ ຫຼື ຊາທີ່ບໍ່ມີຄາເຟອີນ ເພື່ອສຸຂະພາບຈະເປັນການດີທີ່ສຸດ

**5. ດື່ມນໍ້າຂັບສານພິດ**

ການດື່ມນໍ້າເຂົ້າໄປໃນຮ່າງກາຍຫຼາຍໆ ໃນໄລຍະທີ່ກໍາລັງຮັກສາອາການຖອນຄາເຟອີນຈະຊ່ວຍຂັບສານຄາເຟອີນອອກຈາກຮ່າງກາຍໄດ້ຫຼາຍຍິ່ງຂຶ້ນ ຊ່ວຍຫຼຸດອາການຂ້າງຄຽງຕ່າງໆ ເຊັ່ນ: ອາການເຈັບຫົວ, ບໍ່ມີສະມາທິ... ທັງຊ່ວຍໃຫ້ຮ່າງກາຍ ແລະສະໝອງປອດໂປ່ງບໍ່ອ່ອນເພຍ.

www.thairath.co.th

## ອາດ ກະວີລາວ

# ແບບຢ່າງ

\# ແກ້ວຕາວັນ

❊ ຜູ້ໃຫຍ່ເຄີຍຜ່ານຮ້ອຍ ມາກ່ອນຫຼາຍປີ
ປະສົບການມີຫຼາຍ ກ່າຍກອງກັນລົ້ນ
ຄົນເກີດມາພາຍຊ້ອນ ລຸນຫຼັງແລລໍ່າ
ນໍາມາເປັນແບບເບົ້າ ເອົາໄວ້ຫູ່ຕົນ

❊ ຄັນວ່າຄົນເພິ່ນຜູ້ ເນົາຢູ່ມາກົນ
ທໍາຕົນເປັນຄົນດີ ທີ່ສັງຄົມຍໍຍ້ອງ
ບໍ່ຈອງຫອງຫາລື້ວ ໂລເລລວງລ່າຍ
ຄົນພາຍຫຼັງຈຶ່ງໄດ້ ມີເບົ້າຫູ່ດີ

❊ ຫາກວ່າມາກ່ອນແລ້ວ ກະທໍາຊົ່ວເລວຊາມ
ຊອກແຕ່ທໍາຕົວເໝືອນ ຊາດເດຍລະສານເຊື້ອ
ເມື່ອຄົນຫຼັງເຂົາຈ້ອງ ລອງເອົາເປັນຕົວຢ່າງ
ກໍຄົງໝາງໝົ່ນເສົ້າ ຫາເອົາດີບໍ່ໄດ້ ໃຈຊິເປື້ອນເປື່ອຍເໝັນ
ຊົ້ນໃດ

❊ ສາທຸ ຂໍໃຫ້ຜູ້ໃຫຍ່ໄດ້ ກະທໍາແຕ່ຄວາມດີ
ເປັນທີ່ຄົນຄວນຍໍ ຊື່ນຊົມນິຍົມຍ້ອງ
ໃຫ້ລູກຫຼານເຫຼັນຕ້ອງ ເອົາເປັນຕົວຢ່າງ
ຍ່າງຖືກທາງທ່ຽງແທ້ ບໍ່ໂລເລແວ່ລ້ຽວ ໄປເບື້ອງບ່ອນບໍ່ດີ

❊ ສັງຄົມລາວຈຶ່ງໄດ້ ມີຄົນໃໝ່ພັນດີ
ສ້າງເມືອງເຮົາເຮືອງຮອງ ຮຸ່ງສີວິໄລກ້າວ
ໃຫ້ຊື່ສຽງລາວກ້ອງ ກວາງໄກຄົນຊ່າ
ວ່າຄົນລາວເກັ່ງກ້າ ຄຸນສົມບັດພຽບພ້ອມ ສົມຊັ້ນຊື່ລາວ ຊອບແລ້ວ!



## ຟ້າສາຍ ລະບາຍ

(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສຽມທ້ຽນ

❊ **ມື້**ຖະແຫຼງຂ່າວແລ້ງ ຢ່າງເປັນທາງການ ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ກະກຽມໄຂຂຶ້ນຢ່າງເປັນທາງການ ໃນວັນທີ 10-21 ພະຈິກນີ້ ກອງປະຊຸມເທື່ອນີ້ ສະຫຼຸບ 5 ປີວຽກໂດດເດັ່ນ ມີຫຼາຍປະເດັນສໍາຄັນ ຄື ວຽກຂອງລັດຖະບານ ວຽກສານ-ໄອຍະການພ້ອມ ວຽກກວດສອບ-ກວດການັ້ນ ວຽກສະພາເພີ່ນເນັ້ນ ຍໍຍົກຜົນງານ ທັງປະກອບຄໍາເຫັນໃສ່ປະເດັນຫຼາຍຂໍ້ ພໍ່ຮອດດາວລະຫ້າຍ ຫຼາຍມະຕິຊິບົ່ງບອກ ຜົນຮັບຮອງ ວຽກໄດ້ ຫຼາຍອັນພົ້ນເດັ່ນປະເດັນ ທ່ານເອີຍ!

❊ **ຫຍັບ**ຈົ້ມເຂົ້າມາ ບຸນພະທາດຫຼວງວຽງຈັນປະຈໍາປີ ເລີ່ງໃນວັນທີ 5 ພະຈິກນັ້ນ ກົງກັບມື້ ເພັງ 15 ຄໍ່າເດືອນສິບສອງ ຂໍເຊີນຊວນພີ່ນ້ອງ ໃນໂລກໂລກາ ກຽມໃຈເດີນທາງມາ ເທດສະການຂອງຊາດ ຈູງເຫຼັນຫຼານມາຢ້ຽມ ສະເຫຼີມສະຫຼອງບຸນໃຫຍ່ ມາຈັບຈ່າຍເຄື່ອງໃຊ້ ບູຊາໄຫວ້ພະທາດຫຼວງ ນັ້ນແລ້ວ!

## ຊອບຍິ້ມ

\# ພົ້ງດຶງ

### ເລື່ອງ: ຜູ້ຍິງຮັບສາຍ

**ເມຍ:** ລູກເອີຍ! ໂທຫາພໍ່ດຸບອກລາວກັບມາກິນເຂົ້າຢູ່ເຮືອນ ແມ່ເຮັດໄກ້ຊິແລ້ວໆ

**ລູກ (ອາຍຸ 5 ປີ):** ແມ່ ແມ່ ພໍ່ບໍ່ຮັບສາຍ ແຕ່ຜູ້ຍິງຮັບແທນ

ຜ່ານໄປໜຶ່ງຊົ່ວໂມງ ຜູ້ເປັນຜົວກັບຮອດເຮືອນ ດ້ວຍອາການເມື່ອຍລ້າ

**ຜົວ:** ເມຍເອີຍ! ເຈົ້າຈັບໄມ້ຄ້ອນມາເຮັດຫຍັງ

**ເມຍ:** ມຶງໄປເຮັດຫຍັງມາ ສາລະພາບມາດຽວນີ້

**ຜົວ:** ຂ້ອຍເຮັດຫຍັງ, ບໍ່ໄດ້ເຮັດຫຍັງບ່າທີ່ຮັກເອີຍ

**ເມຍ:** ມຶງຢ່າມາອໍ່ແອ້ ເວົ້າມາດຽວນີ້

ໂປກໆ... ຜົ໋ວໆໆໆ... ຜະໆໆໆໆ

ສອງຊົ່ວໂມງຜ່ານໄປ ຢູ່ໂຮງໝໍ, ຜົວເລີ່ມຟື້ນຈາກການສະຫຼົບເໝືອດ

**ເມຍ:** ລູກບອກພໍ່ແດ່ໄວ ວ່າພໍ່ເຮັດອີຫຍັງຜິດມາ!

**ລູກ:** ລູກໂທໄປຫາພໍ່ ແຕ່ມີຜູ້ຍິງຮັບສາຍແທນ!

**ຜົວ:** ແລ້ວເຂົາບອກວ່າແນວໃດ?

**ລູກ:** ໝາຍເລກທີ່ທ່ານໂທຫາ ບໍ່ສາມາດຕິດຕໍ່ໄດ້ໃນຂະນະນີ້ ກະລຸນາໂທໃໝ່ໃນພາຍຫຼັງ!!!

## ສຸພາສິດ-ຄະຕິເຕືອນໃຈ

\# ດອກຫຍ້າ

"ຮູ້ໃຈຄົນ ຄືຄວາມສະຫຼາດ
ຮູ້ໃຈຕົນ ຄືປັນຍາທີ່ແທ້ຈິງ"

# ສະພາແຫ່ງຊາດ Bulgaria ເລືອກຕັ້ງປະທານຜູ້ໃໝ່

(Xinhua)-ສະພາແຫ່ງຊາດບຸນກາລີ ໄດ້ເລືອກຕັ້ງປະທານຜູ້ໃໝ່ເມື່ອວັນພຸດທີ 29 ຕຸລາຜ່ານມາຫຼັງຈາກທີ່ພັກຮ່ວມລັດຖະບານຕັດສິນໃຈໝູນວຽນປະທານສະພາແຫ່ງຊາດ ທຸກໆ 10 ເດືອນ.

ນາງ ຣາຢາ ນາຊາຣຍັນ (Raya Nazaryan) ສະມາຊິກສະພາແຫ່ງຊາດ (ສສຊ) ຈາກພັກGERB-UDF ໄດ້ຮັບການເລືອກຕັ້ງເປັນປະທານສະພາແຫ່ງຊາດ ແທນນາງ ນາຕາລີຢາ ຄີເຊໂລວາ (Nataliya Kiselova) ຈາກພັກຝ່າຍຊ້າຍ BSP-United; ນາຊາຣຍັນ ໄດ້ຮັບການສະໜັບສະໜູນຈາກ ສສຊ 129 ຈາກ ທັງໝົດ 240 ທີ່ນັ່ງ, ມີ ສສຊ ຝ່າຍຄ້ານ 77 ຄົນ ລົງຄະແນນສຽງຄັດຄ້ານ ແລະ ອີກ 14 ຄົນ ງົດອອກສຽງ.

ນາຊາຣຍັນເກີດໃນວັນທີ 16 ກັນຍາ 1985 ເຄີຍດຳລົງຕຳແໜ່ງເປັນປະທານສະພາແຫ່ງຊາດຊຸດກ່ອນ ໃນໄລຍະເວລາສັ້ນໆ ຈາກເດືອນມິຖຸນາ ຫາ ເດືອນພະຈິກ 2024; ຄີເຊໂລວາ ໄດ້ຮັບການເລືອກຕັ້ງເມື່ອວັນທີ 6 ທັນວາປີຜ່ານມາ.



# ສະພາແຫ່ງຊາດ Malawi ເລືອກ ສຸເລມານ ເປັນປະທານ



(Xinhua) - ວັນທີ 29 ຕຸລາຜ່ານມາ, ສະມາຊິກສະພາແຫ່ງຊາດມາລາວີ ໄດ້ເລືອກຕັ້ງ ຊາເມຍຣ໌ ສຸເລມານ (Sameer Suleman) ຈາກພັກປະຊາທິປະໄຕກ້າວໜ້າ (Democratic Progressive Party - DPP) ທີ່ ເປັນພັກລັດຖະບານ ເປັນປະທານສະພາແຫ່ງຊາດ; ສຸເລມານ ເຊິ່ງຖືກສະເໜີຊື່ໂດຍ ປີເຕີ ມູທາຣິກາ (Peter Mutharika) ຜູ້ນຳ DPP ແລະ ປະທານາທິບໍດີຂອງປະເທດ ໄດ້ຮັບຄະແນນ 134 ສຽງ, ເອົາຊະນະ ປີເຕີ ດິມບາ (Peter Dimba) ຄູ່ແຂ່ງຈາກພັກ Malawi Congress ທີ່ໄດ້ຮັບ 85 ສຽງ.

ສະພາແຫ່ງຊາດ ແຫ່ງສາທາລະນະລັດມາລາວີມີ229 ທີ່ນັ່ງ, ເຖິງແມ່ນວ່າຈະຍັງບໍ່ໄດ້ມີການເລືອກຕັ້ງຄົບທຸກທີ່ນັ່ງ ເນື່ອງຈາກຖືກໂຈະການເລືອກຕັ້ງໃນເຂດເລືອກຕັ້ງຕ່າງໆຍ້ອນຄວາມຜິດປົກກະຕິຫຼາຍຢ່າງ.

ສຸເລມານ ໄດ້ສາບານຕົວຂຶ້ນຮັບຕຳແໜ່ງ ແລະ ຈະປະຕິບັດໜ້າທີ່ເປັນເວລາ 5 ປີ.

## ຕິດຕາມ...

(ຕໍ່ຈາກໜ້າ 6)

ຈຳເມືອງດາກຈຶງ; ມີ ສສຂ ປະຈຳເຂດເລືອກຕັ້ງເມືອງ, ຄະນະປະຈຳພັກເມືອງ, ພະແນກການ, ຫ້ອງການ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານກ່ຽວກັບການກະກຽມຄວາມພ້ອມດ້ານໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນເສນາທິການ ຂອງຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ໃນຊຸດຕໍ່ໄປ ຈາກທ່ານ ເພັງນາ ຈັນທະພອນແລະຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂດຍສະເພາະການພັດທະນາແຫຼ່ງທ່ອງທ່ຽວທົ່ງນົມ, ການເຊົ່າສຳປະທານທີ່ດິນຂອງກຸ່ມບໍລິສັດທີ່ມາລົງທຶນພັດທະນາຢູ່ເມືອງດາກຈຶງທີ່ກວມເອົາເນື້ອທີ່ແຫຼ່ງທ່ອງທ່ຽວທົ່ງນົມ ພ້ອມທັງປຶກສາຫາລື ເພື່ອຊອກຫາທາງອອກຮ່ວມກັນ ໃນການອະນຸລັກຮັກສາແຫຼ່ງທ່ອງທ່ຽວດັ່ງກ່າວໃຫ້ມີຄວາມຍືນຍົງ.

**(ນາລີວັນ)**

# ຈີນ ອອກກົດໝາຍກຳນົດໃຫ້ຜູ້ມີອິດທິພົນ ໃນຂົງເຂດສຳຄັນຕ້ອງມີວຸດທິການສຶກສາ




(AFP) - ສປຈີນ ໄດ້ອອກກົດໝາຍກຳນົດໃຫ້ຜູ້ມີອິດທິພົນ (influencer) ໃນຂົງເຂດການແພດ, ກົດໝາຍ, ການສຶກສາ ແລະການເງິນ ຕ້ອງມີໃບຢັ້ງຢືນຫຼືປະລິນຍາທີ່ຖືກຕ້ອງຕາມກົດໝາຍໃນຂົງເຂດນັ້ນ.

ກົດໝາຍສະບັບໃໝ່ ເຊິ່ງເລີ່ມມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 25 ຕຸລາຜ່ານມາ ມີເປົ້າໝາຍເພື່ອປ້ອງກັນການເຜີຍແຜ່ຂໍ້ມູນທີ່ບິດເບືອນ ແລະ ກຳນົດໃຫ້ຜູ້ທີ່ສະເໜີຜະລິດຕະພັນ ຫຼື ຄຳແນະນຳໃນຂົງເຂດເຫຼົ່ານີ້ ຕ້ອງຮັບຜິດຊອບຕໍ່ທຸກຄວາມເສຍຫາຍທີ່ອາດຈະເກີດຂຶ້ນກັບບຸກຄົນທີສາມ.

ສຳນັກງານບໍລິຫານໄຊເບີຂອງຈີນ (Cyberspace Administration of China - CAC) ກຳນົດໃຫ້ເວທີໂຕອິນ (Douyin - ແອັບ TikTok ສະບັບຂອງຈີນ), ເວີຍປໍ໋ (Weibo) ແລະບີລີບີລີ (Bilibili) ຈະຕ້ອງມີລະບົບການກວດສອບປະຫວັດຜູ້ສ້າງເນື້ອຫາໃນຂົງເຂດຂ້າງເທິງ.

ຜູ້ທີ່ບໍ່ປະຕິບັດຕາມ ອາດຈະຖືກໂຈະບັນຊີ ຫຼື ຖືກປັບໃໝສູງສຸດ 100,000 ຢວນ.

# ປິດກອງປະຊຸມຄະນະປະຈຳ NPC ສະໄໝທີ 18




(Xinhua) - ວັນທີ 28 ຕຸລາຜ່ານມາ, ຄະນະປະຈຳສະພາຜູ້ແທນປະຊາຊົນທົ່ວປະເທດຈີນ (NPC) ຊຸດທີ XIV ໄດ້ປິດກອງປະຊຸມສະໄໝທີ 18 ໂດຍການເປັນປະທານຂອງ ຈ້າວ ເລີ້ຈີ້ ປະທານຄະນະປະຈຳ NPC; ກອງປະຊຸມໄດ້ລົງຄະແນນສຽງຮັບຮອງເອົາກົດໝາຍທະເລ ຫຼື ການເດີນເຮືອ (Maritime Law) ສະບັບປັບປຸງ ແລະ ກົດໝາຍການຈັດຕັ້ງຂອງຄະນະກຳມະການໃນຕົວເມືອງ (Organic Law of Urban Residents' Committees) ສະບັບປັບປຸງ ລວມທັງມະຕິວ່າດ້ວຍການປັບປຸງກົດໝາຍຄວາມປອດໄພທາງໄຊເບີ, ກົດໝາຍພາສີປົກປ້ອງສິ່ງແວດລ້ອມ ແລະ ກົດໝາຍການຈັດຕັ້ງຂອງຄະນະກຳມະການບ້ານ (Organic Law of Urban Residents' Committees).

ສີ ຈິ້ນຜິງ ໄດ້ລົງນາມໃນຄຳສັ່ງປະທານປະເທດ ເພື່ອປະກາດໃຊ້ກົດໝາຍ ແລະ ມະຕິດັ່ງກ່າວ.

ນອກຈາກນີ້, ກອງປະຊຸມຍັງໄດ້ມີມະຕິແຕ່ງຕັ້ງ ຈາງ ເສິງໝິນ (Zhang Shengmin) ເປັນຮອງປະທານຄະນະກຳມະການທະຫານສູນກາງ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ແລະ ປົດ ເຫີ ເຫວີຍຕົງ (He Weidong) ອອກຈາກຕຳແໜ່ງນີ້.

# ນະໂຍບາຍທີ່ມີປະສິດທິພາບ ເພື່ອດຶງດູດອີຄົນເກັ່ງຈາກຕ່າງປະເທດ

❖ ວິເສດ ສະແຫວງສຶກສາ

ອ່ານບົດນີ້ສຸດ, ທ່ານຈະໄດ້ຮູ້ກ່ຽວກັບເຫດການສຳຄັນສອງເລື່ອງຄື: ໜຶ່ງກ່ຽວກັບເຄວີຊາ (Kvisa) ທີ່ທາງການ ສປຈີນ ປະກາດນຳໃຊ້ຫວ່າງບໍ່ເທິງມານີ້ ເພື່ອດຶງດູດຊາວໜຸ່ມຕ່າງປະເທດ ເຂົ້າໄປແລກປ່ຽນບົດຮຽນກັບຊາວໜຸ່ມຈີນ ໃນຂົງເຂດຕ່າງໆເຊັ່ນ: ການສຶກສາ, ວັດທະນະທຳ, ເຕັກໂນໂລຊີ-ນະວັດຕະກຳໃໝ່ໆແລະຄວາມອາດສາມາດໃນການຮ່ວມມືກັນປະກອບການດ້ານທຸລະກິດ; ສ່ວນເລື່ອງທີສອງປິດທ້າຍນັ້ນ ມາຈາກຍີ່ປຸ່ນ ກ່ຽວກັບຜົນຮັບໃນການປະຕິບັດນະໂຍບາຍດຶງດູດເອົາແຮງງານຄຸນນະພາບ, ແຮງງານຝີມືໂດດເດັ່ນຈາກຕ່າງປະເທດ ເພື່ອໄປຕື່ມເຕັມແຮງງານຍີ່ປຸ່ນ ທີ່ພວມບົກເປັນຫາດ-ຂາດເປັນວັງ ຍ້ອນອັດຕາການເກີດຂອງເດັກນ້ອຍຫຼຸດລົງ ແຕ່ຈຳນວນຜູ້ເຖົ້າພັດເພີ່ມຂຶ້ນຢ່າງວ່ອງໄວ.

ສຳລັບເລື່ອງທີ່ໜຶ່ງນັ້ນ, ແກະມາຈາກບົດຄວາມໃນໜັງສືພິມວຽງຈັນທາມ (1 ຕຸລາ 2025) ທີ່ບອກວ່າ ທາງການຈີນໄດ້ປະກາດນະໂຍບາຍ Kvisa ເພື່ອດຶງດູດເອົາຊາວໜຸ່ມຕ່າງປະເທດທີ່ມີພອນສະຫວັນໃນຂະແໜງການທີ່ກ່າວມາຂ້າງເທິງນີ້ ໂດຍເນັ້ນຊາວໜຸ່ມທີ່ເກັ່ງດ້ານວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ເຂົ້າໄປຈີນ ເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນ ກັບຊາວໜຸ່ມຈີນ. Kvisa ຈັດຢູ່ໃນປະເພດວີຊາທຳມະດາ ທີ່ ສປຈີນ ມີຢູ່ກ່ອນໜ້າແລ້ວ, ທີ່ແຕກຕ່າງແດ່ກໍຄື ຜູ້ຖື Kvisa ມີຄວາມສະດວກຫຼາຍຂຶ້ນໃນການເຂົ້າ-ອອກປະເທດ (ໄດ້ຫຼາຍຄັ້ງກວ່າ) ສ່ວນອາຍຸການນຳໃຊ້ກໍຍາວກວ່າ; ແຕ່ແນວໃດກໍດີ, ເງື່ອນໄຂເພື່ອຈະໄດ້ຮັບ Kvisa ນີ້ ກໍຄືຜູ້ກ່ຽວຕ້ອງມີຄຸນສົມບັດຄົບຖ້ວນຕາມທາງການຈີນວາງອອກ ແລະ ມີເອກະສານຢັ້ງຢືນຄັກແນ່.

ທ່ານ ລູຊຽງ (Lu Xiang) ຊ່ຽວຊານປະຈຳສະຖາບັນວິທະຍາສາດສັງຄົມຈີນ ໄດ້ມີຄຳເຫັນກ່ຽວກັບ Kvisa ວ່າເປັນປະເພດວີຊາເພື່ອສົ່ງເສີມໃຫ້ມີເວທີແລກປ່ຽນບົດຮຽນນຳກັນລະຫວ່າງຊາວໜຸ່ມທີ່ມີພອນສະຫວັນຈາກຕ່າງປະເທດທົ່ວໂລກ ແລະ ຈີນ, ຊາວໜຸ່ມຕ່າງປະເທດທີ່ໄດ້ຮັບ Kvisa ມີທາງເລືອກໃນການເຮັດວຽກຢູ່ຈີນ ຫຼື ກັບຄືນປະເທດ ພາຍຫຼັງເຄື່ອນໄຫວຕາມພອນສະຫວັນແລະຄວາມຊຳນານງານຂອງພວກເຂົາ; Kvisa ບໍ່ມີເປົ້າໝາຍໃຫ້ຊາວໜຸ່ມມາແຂ່ງດີແຂ່ງເດັ່ນກັນລ້າໆ ແຕ່ແມ່ນເພື່ອເປີດກວ້າງຄວາມຮູ້ ແລະ ປະສົບການສຳລັບຊ່ຽວຊານຊາວໜຸ່ມເພື່ອການຮ່ວມມືກັນ, ເຕີບໂຕຂຶ້ນພ້ອມໆກັນ ແລະ ມີພັນທະກິດຮ່ວມກັນໃນໄລຍະຍາວ.

ສຳລັບເລື່ອງທີສອງຈາກຍີ່ປຸ່ນນີ້ ກໍມີສ່ວນຄ້າຍຄຽງກັບເລື່ອງຈາກຈີນທີ່ເວົ້າມາແລ້ວ ແຕ່ເປັນເລື່ອງນະໂຍບາຍວີຊາເພື່ອດຶງດູດເອົາແຮງງານຄຸນນະພາບເຂົ້າຍີ່ປຸ່ນ ເພື່ອຕື່ມເຕັມຂະແໜງການອຸດສະຫະກຳທີ່ຂາດແຄນແຮງງານລະດັບຊ່ຽວຊານ. ນະໂຍບາຍວີຊາດັ່ງກ່າວປະກາດໃຊ້ມາແຕ່ປີ2019; ພາຍໃຕ້ນະໂຍບາຍວີຊານີ້, ມາຮອດທ້າຍປີ 2024 ຍີ່ປຸ່ນສາມາດດຶງດູດເອົາແຮງງານຄຸນນະພາບຈາກຕ່າງປະເທດໄດ້ເຖິງ 284,466 ຄົນ, ສ່ວນສະຖິຕິໃນທ້າຍເດືອນມິຖຸນາ 2025 ນີ້ ຕົວເລກໄດ້ເພີ່ມຂຶ້ນເປັນ 336,196 ຄົນ ຄືເພີ່ມຂຶ້ນ 18.2% ທຽບກັບໝົດປີ 2024 ໃນນັ້ນ, ແຮງງານຈາກຫວຽດນາມກວມເອົາ 44.2%, ອິນໂດເນເຊຍ 20.7%, ມຽນມາ 10.6%, ຟີລິບປິນ 9.7% ແລະ ຈີນ 6.0%. ວີຊາປະເພດນີ້ມີຢູ່ 2 ຊະນິດຄື: ຊະນິດທີ 1 ອະນຸຍາດໃຫ້ແຮງງານສາມາດເຮັດວຽກໄດ້ໃນໄລຍະ 5 ປີ, ສ່ວນປະເພດທີ 2 ແມ່ນສຳລັບແຮງງານລະດັບຊ່ຽວຊານ ແລະ ສາມາດຕໍ່ໄດ້ຕະຫຼອດໄປ.


ທະນາຄານພັດທະນາລາວ
LDB Bank




## ບໍ່ມີຫຍັງແປກດອກ

*# ບ່າວກະບື*

ພຸດ: "ກ່ຳ, ພໍ່ໂຕເປັນນາຍຄູແທ້ໆ ແຕ່ນ້ອງສາວອາຍຸໜຶ່ງປີຂອງໂຕ ພັດອ່ານໜັງສືກໍບໍ່ເປັນ."

ກ່ຳ: "ບໍ່ເຫັນແປກບ່ອນໃດ... ພໍ່ໂຕກໍເປັນນາຍໝໍໃສ່ແຂ້ວແທ້ໆ ແຕ່ນ້ອງຊາຍອາຍຸໜຶ່ງເດືອນຂອງໂຕ ພັດບໍ່ມີແຂ້ວເຫຼັ້ມໜຶ່ງກໍບໍ່ມີຊ້ຳ"

## So What

*# BAOKBU*

Phoot: "Kam, your father is a teacher but your one-year old sister doesn't even know how to read a letter."

Kam: "So what? your father is a dentist and your one-month old brother doesn't even have a single tooth"

ຕາມພາສາ ກາຕູນ




ແມວແຮກກະຕ່າ ໝາແຮກຜ້າເຫຼີ່ມ ຍັງວົນວຽນຢູ່ຕາມຮ່ອມບ້ານ

● ໂດຍ : ພູຜາ



## ສ້າງຄວາມເຂັ້ມແຂງ...

(ຕໍ່ຈາກໜ້າ 1)

ຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມເປັນເອກະພາບ, ຖືກຕ້ອງ ແລະສອດຄ່ອງກັບກົດໝາຍທັງເປັນການສະຫຼຸບຖອດຖອນບົດຮຽນກ່ຽວກັບການພິຈາລະນາຄົ້ນຄວ້າຄຳຮ້ອງຂໍຄວາມເປັນທຳຂອງ ກມຍທ ໃນໄລຍະຜ່ານມາ ເພື່ອຍົກສູງຄຸນນະພາບການຄົ້ນຄວ້າວຽກງານດັ່ງກ່າວໃຫ້ດີຂຶ້ນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງບົດສະເໜີກົນໄກການປະສານງານກັບພາກສ່ວນກ່ຽວຂ້ອງ ແລະ ບົດສະຫຼຸບການພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງກຳມາທິການຍຸຕິທຳ; ຈາກນັ້ນ, ໄດ້ມີການປະກອບຄວາມຄິດຄວາມເຫັນ ແລະແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ.

**(ນາງ ກຸກກິກ ບຸດດາໄຊ)**

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ